# ບົດບັນທຶກກອງປະຊຸມວິສາມັນພາກເໜືອລາວ ກັບ ແຂວງຢູນນານ ແລະ ກອງປະຊຸມ ຄັ້ງທີ VI ຂອງຄະນະປະສານງານຮ່ວມມືພາກເໜືອ ສປປ ລາວ ກັບແຂວງ ຢູນນານ ສປ ຈີນ

## ທີ່ນະຄອນພູເອີ້ ແຂວງຢູນນານ ສປ ຈີນ

ກອງປະຊຸມວິສາມັນພາກເໜືອ ສປປ ລາວ ກັບ ແຂວງຢູນນານ ແລະ ກອງປະຊຸມ ຄັ້ງທີ VI ຂອງຄະນະປະສານງານຮ່ວມມືພາກເໜືອ ສປປ ລາວ ກັບແຂວງ ຢູນນານ ສປ ຈີນ ຈັດຂຶ້ນໃນວັນທີ 16-17 ຕຸລາ 2013 ທີ່ນະຄອນພູເອີ້ ແຂວງຢູນນານ ສປ ຈີນ. ພະນະທ່ານ ສົມສະຫວາດ ເລັ່ງສະຫວັດ ຮອງນາຍົກລັດຖະມົນຕີ ປະທານຄະນະກຳມາທິການຮ່ວມມື ລາວ-ຈີນ ແລະ ທ່ານ ຫຼີ ຈີ້ເຫິງ ເຈົ້າແຂວງຢູນນານ ສປ ຈີນ ໄດ້ນຳພາຄະຜູ້ແທນສອງຝ່າຍເຂົ້າຮ່ວມກອງປະຊຸມໃນຄັ້ງນີ້; ທ່ານ ສົມດີ ບຸນຄຸ້ມ ເອກອັກຄະລັດຖະທູດ ສປປ ລາວ ປະຈຳ ສປ ຈີນ ແລະ ທ່ານ ກວນ ຫວາປິງ ເອກອັກຄະລັດຖະທູດ ສປ ຈີນ ປະຈຳ ສປປ ລາວ, ບັນດາການນຳຂັ້ນສູນກາງທີ່ກ່ຽວຂ້ອງຂອງລັດຖະບານຈີນ ກໍ່ໄດ້ຕອບສະໜອງຕາມການເຊື້ອເຊີນ ແລະ ເຂົ້າຮ່ວມກອງປະຊຸມໃນຄັ້ງນີ້. ດັ່ງນັ້ນ ຈຶ່ງໄດ້ບັນທຶກເນື້ອໃນຂອງກອງປະຊຸມດັ່ງນີ້:

## I. ສະພາບລວມຂອງກອງປະຊຸມ

1.1. ຂໍສະແດງຄວາມຂອບໃຈ ຕໍ່ລັດຖະບານ ແລະ ພາກສ່ວນກ່ຽວຂ້ອງຂອງສອງປະເທດ ທີ່ໃຫ້ຄວາມສຳຄັນ, ມີຄວາມເປັນຫ່ວງເປັນໃຍ ແລະ ສະໜັບສະໜູນໃນການເພີ່ມທະວີ ແລະ ຊຸກຍູ້ການຮ່ວມມືລະຫວ່າງ ບັນດາແຂວງພາກເໜືອ ສປປ ລາວ ກັບ ແຂວງຢູນນານ ສປ ຈີນ. ຝ່າຍລາວຂໍສະແດງຄວາມຂອບໃຈຕໍ່ຝ່າຍຈີນ ທີ່ໄດ້ເອົາໃຈໃສ່ກະກຽມກອງປະຊຸມຢ່າງຮອບຄອບ ເຮັດໃຫ້ກອງປະຊຸມໃນຄັ້ງນີ້ປະສົບຜົນສຳເລັດຢ່າງຈົບງາມ. ຝ່າຍຢູນນານ ຂໍສະແດງຄວາມຂອບໃຈຕໍ່ ພະນະທ່ານ ສົມສະຫວາດ ເລັ່ງສະຫວັດ ຮອງນາຍົກລັດຖະມົນຕີ ທີ່ນຳພາຄະນະຜູ້ແທນຝ່າຍລາວ ເຂົ້າຮ່ວມກອງປະຊຸມໃນຄັ້ງນີ້.

1.2. ໃນພິທີເປີດກອງປະຊຸມ, ພະນະທ່ານ ສົມສະຫວາດ ເລັ່ງສະຫວັດ ຮອງນາຍົກລັດຖະມົນຕີ, ພະນະທ່ານ ຫຼີ ຈີ້ເຫິງ ເຈົ້າແຂວງ ຢູນນານ ໄດ້ຂຶ້ນກ່າວຄຳປາໄສ, ທົບທວນຄືນການພົວພັນຮ່ວມມືທີ່ເປັນມິດຕະພາບອັນດີງາມ ລະຫວ່າງ ສປປ ລາວ ກັບ ແຂວງຢູນນານ ໂດຍສະເພາະແມ່ນ ບັນດາ 9 ແຂວງພາກເໜືອລາວ ທີ່ເຄີຍມີມາ ແລະ ໄດ້ຮັບການພັດທະນາຢ່າງບໍ່ຢຸດຢັ້ງ, ສາມາດຢືນຢັນໄດ້ວ່າກົນໄກການຮ່ວມມື ລະຫວ່າງ ພາກເໜືອລາວ ແລະ ແຂວງຢູນນານ ໄດ້ມີບົດບາດອັນຕັ້ງໜ້າໃນການຍຶດໝັ້ນ ແລະ ພັດທະນາ ການພົວພັນຮ່ວມມືມິດຕະພາບອັນດີງາມຖານບ້ານໃກ້ເຮືອນຄຽງ, ພ້ອມກັນນັ້ນ ກໍ່ມີການສະເໜີຄວາມຕ້ອງການຕ່າງໆ ຕໍ່ການເພີ່ມທະວີການພົວພັນຮ່ວມມືມິດຕະພາບລະຫວ່າງສອງຝ່າຍ. ທ່ານ ວິຈິດ ຊິນດາວົງ ຜູ້ຊ່ວຍລັດຖະມົນຕີວ່າການກະຊວງແຜນການ ແລະ ການລົງທຶນ, ຮອງປະທານຄະນະກຳມາທິການຮ່ວມມື ລາວ-ຈີນ, ທ່ານ ກາວ ສູ້ຊຸນ ຮອງເຈົ້າແຂວງຢູນນານ, ຫົວໜ້າຄະນະປະສານງານຮ່ວມມືແຂວງຢູນນານ ກັບ ພາກເໜືອລາວ ຕ່າງກໍ່ໄດ້ມີຄຳເຫັນຕໍ່ກອງປະຊຸມ; ສອງຝ່າຍໄດ້ສະຫຼຸບສະພາບຄວາມຄືບໜ້າ ແລະ ຜົນສຳເລັດໃນການຮ່ວມມື ແຕ່ກອງປະຊຸມຄັ້ງທີ V ຂອງຄະນະປະສານງານຮ່ວມມືພາກເໜືອລາວ ກັບແຂວງ ຢູນນານ ໃນເດືອນກັນຍາ 2011, ພ້ອມທັງສະເໜີຈຸດສຳຄັນໃນການຮ່ວມມືສອງຝ່າຍໃນຕໍ່ໜ້າ ຈົນຮອດກອງປະຊຸມຄັ້ງທີ VII.

ກອງປະຊຸມໄດ້ແບ່ງອອກເປັນ 7 ກຸ່ມ ເພື່ອສຶກສາຄົ້ນຄວ້າ ແລະ ສົນທະນາແລກປ່ຽນນຳກັນ ກ່ຽວກັບໂຄງການຮ່ວມມືທີ່ສຳຄັນ ແລະ ບັນຫາທີ່ຄ້າງຄາກັນ ຢ່າງເລິກເຊິ່ງ, ກົງໄປກົງມາ. ຄະນະຜູ້ແທນຝ່າຍລາວສ່ວນຫຼາຍໄດ້ລົງທັດສະນະສຶກສາຢູ່ ສວນປູກຊາ ກຸ່ມບໍລິສັດພູເອື້ທຽນຊື້ລີ້ ແລະ ເຂດນິຄົມອຸດສາຫະກຳ ພູເອີ້.

## II. ຜົນສຳເລັດໃນການຮ່ວມມື ລະຫວ່າງ ບັນດາແຂວງພາກເໜືອ ສປປ ລາວ ແລະແຂວງຢຸນນານ ສປ ຈີນ ໃນໄລຍະສອງປີຜ່ານມາ

### 2.1. ການຢ້ຽມຢາມຂອງຜູ້ນຳຂັ້ນສູງໄດ້ຊຸກຍູ້ການຮ່ວມມື ແລະ ມິດຕະພາບຂອງສອງຝ່າຍ

ນັບແຕ່ທ້າຍປີ 2011 ເປັນຕົ້ນມາ, ພະນະທ່ານ ຈູມມາລີ ໄຊຍະສອນ ເລຂາທິການໃຫຍ່ສູນກາງພັກ, ປະທານປະເທດແຫ່ງ ສປປ ລາວ ແລະ ການນຳຂັ້ນສູງ ຂອງສູນກາງພັກ ແລະ ລັດຖະບານລາວ, ພ້ອມທັງການນຳຂັ້ນສູງຂອງນະຄອນຫຼວງວຽງຈັນ, ແຂວງຫຼວງນ້ຳທາ ແລະ ການນຳຂັ້ນທ້ອງຖິ່ນ ຂອງລາວ ຫຼາຍທ່ານ (ຄັ້ງ) ກໍ່ໄດ້ຕອບສະໜອງຕາມການເຊື້ອເຊີນຂອງແຂວງຢຸນນານ ເດີນທາງໄປຢ້ຽມຢາມ ຫຼື ພັກເຊົາ ຢູ່ແຂວງຢຸນນານ. ທ່ານ ຊິນ ກວາງຣົງ ເລຂາພັກແຂວງ, ທ່ານ ຫຼີ ຈີ້ເຫິງ ເຈົ້າແຂວງຢຸນນານ ແລະ ການນຳຄະນະພັກ, ອຳນາດການປົກຄອງແຂວງຢຸນນານ, ພ້ອມທັງການນຳນະຄອນຄຸນມິງ, ນະຄອນພູເອີ້, ກິ່ງແຂວງສິບສອງພັນນາ ແລະ ອື່ນໆ, ກໍ່ໄດ້ຕອບສະໜອງຕາມການເຊື້ອເຊີນ ຫຼື ຕິດຕາມຄະນະການນຳ ສປ ຈີນ ເດີນທາງມາຢ້ຽມຢາມ ສປປ ລາວ, ເຊິ່ງເປັນທ່າແຮງຊຸກຍູ້ ໃນການແລກປ່ຽນ ແລະ ການຮ່ວມມືມິດຕະພາບຂອງທັງສອງຝ່າຍ.

### 2.2. ການຮ່ວມມືດ້ານການການຄ້າ, ການເງິນ ແລະ ການທະນາຄານ ມີການພັດທະນາຢ່າງວ່ອງໄວ.

2.2.1. ປີ 2012, ມູນຄ່າການຄ້ານຳເຂົ້າ-ສົ່ງອອກ ລະຫວ່າງ ສປປ ລາວ ແລະ ແຂວງຢຸນນານ ບັນລຸ 340.000.000 ໂດລາ ສຫລ ທຽບໃສ່ໄລຍະດຽວກັນຂອງປີທີ່ຜ່ານມາເພີ່ມຂຶ້ນ 28,3%, ໃນນັ້ນການສົ່ງອອກຂອງແຂວງຢຸນນານ ບັນລຸ 151.000.000 ໂດລາ ສຫລ ທຽບໃສ່ ໄລຍະດຽວກັນຂອງປີທີ່ຜ່ານມາເພີ່ມຂຶ້ນ 46,7%, ແລະ ຢຸນນານນຳເຂົ້າ 189.000.000 ໂດລາ ສຫລ ທຽບໃສ່ ໄລຍະດຽວກັນຂອງປີທີ່ຜ່ານມາເພີ່ມຂຶ້ນ 16,5%. 6 ເດືອນຕົ້ນປີ ປີ 2013, ມູນຄ່າການຄ້ານຳເຂົ້າ-ສົ່ງອອກ ລະຫວ່າງ ສປປ ລາວ ແລະ ແຂວງຢຸນນານ ແມ່ນ 210.000.000 ໂດລາ ຫສລ ທຽບໃສ່ໄລຍະດຽວກັນຂອງປີທີ່ຜ່ານມາ ເພີ່ມຂຶ້ນ 40,8%, ໃນນັ້ນ ການສົ່ງອອກຂອງແຂວງຢຸນນານ ບັນລຸ 76.840.000 ໂດລາ ສຫລ ທຽບໃສ່ ໄລຍະດຽວກັນຂອງປີທີ່ຜ່ານມາເພີ່ມຂຶ້ນ 14,6%; ການນຳເຂົ້າບັນລຸ 133.000.000 ໂດລາ ສຫລ,ທຽບໃສ່ໄລຍະດຽວກັນຂອງປີທີ່ຜ່ານມາເພີ່ມຂຶ້ນ 62,3%.

2.2.2. ພາຍໃຕ້ຂອບການຮ່ວມມື ລະຫວ່າງ ບັນດາແຂວງພາກເໜືອລາວ ກັບ ແຂວງຢຸນນານ ສປ ຈີນ, ກອງປະຊຸມໜ່ວຍງານປະສານງານຮ່ວມມືດ້ານການຄ້າ ແລະ ການລົງທຶນ ຄັ້ງທີ 1 ລະຫວ່າງ ບັນດາແຂວງພາກເໜືອ ສປປ ລາວ ກັບ ແຂວງຢຸນນານ ສປ ຈີນ ເຊິ່ງໄດ້ຈັດຂຶ້ນໃນເດືອນພະຈິກ ປີ 2012 ທີ່ແຂວງຫຼວງພະບາງ ສປປ ລາວ, ເຊິ່ງໃນກອງປະຊຸມສອງຝ່າຍໄດ້ບັນລຸການຮັບຮູ້ຮ່ວມກັນກ່ຽວກັບການຮ່ວມມືດ້ານການຄ້າ ແລະ ການລົງທຶນ ໃນ 5 ດ້ານ.

2.2.3. ບໍລິສັດລົງທຶນຕ່າງປະເທດແຂວງຢຸນນານ ໄດ້ຮັບຜິດຊອບປະຕິບັດໂຄງການກໍ່ສ້າງໂຮງງານທໍອາຫານສັດຢູ່ພາກເໜືອລາວ. ໂຄງການກວມເອົາເນື້ອທີ່ປະມານ 34,3 ມູ, ກຳລັງການຜະລິດ 60.000 ໂຕນ/ປີ, ມູນຄ່າການລົງທຶນທັງໝົດ 5.250.000 ໂດລາ ສຫລ. ໂຄງການເລີ່ມສ້າງ ເດືອນພະຈິກ ປີ

2012 ແລະ ສຳເລັດໃນເດືອນມີນາ ປີ 2013, ແລະໄດ້ຈັດພິທີມອບ-ຮັບໃຫ້ຝ່າຍລາວໃນວັນທີ 29 ກັນຍາ ປີ 2013.

2.2.4. ທະນາຄານພູ້ຕຽນແຂວງຢຸນນານປະຈຳລາວ ໄດ້ຮ່ວມກັບ ທະນາຄານການຄ້າຕ່າງປະເທດລາວມະຫາຊົນ (BCEL) ເປີດການຊຳລະສະກຸນເງິນລາວ-ຈີນຂ້າມແດນ ຢ່າງເປັນທາງການ, ໂດຍໄດ້ເປີດປ້າຍອັດຕາແລກປ່ຽນສະກຸນເງິນຢວນ ແລະ ເງິນກີບ, ເຊິ່ງເປັນທະນາຄານແຫ່ງທຳອິດໃນບັນດາທະນາຄານທຸລະກິດໃນທົ່ວປະເທດ ທີ່ເປີດກິດຈະການແລກປ່ຽນສະກຸນເງິນຢວນ-ເງິນກີບ. ແຂວງຢຸນນານຕັ້ງໜ້າຊຸກຍູ້ທະນາຄານປະຊາຊົນ ສາຂາສິບສອງພັນນາ ຮ່ວມມືສຶກສາຄົ້ນຄວ້າແລກປ່ຽນເຕັກນິກຂໍ້ມູນຂ່າວສານທາງດ້ານການເງິນ ແລະ ວຽກງານທະນາຄານ ກັບ ທະນາຄານພັດທະນາລາວສາຂາແຂວງຜົ້ງສາລີ.

## 2.3. ການຮ່ວມມືດ້ານກະສິກຳ, ປ່າໄມ້ ແລະ ປູກພືດທົດແທນການປູກຝິ່ນ.

2.3.1. ໄດ້ດຳເນີນການຄຸ້ມຄອງ ແລະ ບູລະນະຮັກສາ " ສວນສາທິດ ເຕັກນິກ ວິດທະຍາສາດ ກະສິກຳ ແຂວງອຸດົມໄຊ-ແຂວງຢຸນນານ " ຢ່າງມີປະສິດທິຜົນ, ໂດຍພາຍໃຕ້ການສະໜັບສະໜູນດ້ານເຕັກນິກ ຈາກ ກະຊວງກະສິກຳ ສປ ຈີນ ແລະ ພະແນກກະສິກຳແຂວງຢຸນນານ, ໄດ້ມີການລົງທຶນໂຄງການ, ເປີດຊຸດຝຶກອົບຮົມ 7 ຊຸດ, ໃຫ້ແກ່ພະນັກງານຄຸ້ມຄອງ ແລະ ພະນັກງານວິຊາການ 9 ແຂວງພາກເໜືອລາວ, ຫຼາຍກວ່າ 200 ເທື່ອຄົນ.

2.3.2. ສືບຕໍ່ກໍ່ສ້າງ ສະຖານີກວດກາ ປ້ອງກັນ ແລະ ກັກກັນພະຍາດສັດ ຂ້າມແດນລາວ-ຈີນ 4 ແຫ່ງ ໃຫ້ສຳເລັດສົມບູນ. 2 ປີຜ່ານມາ, ຂະແໜງການສັດຕະວະແພດຂັ້ນຕ່າງໆແຂວງຢຸນນານ ໄດ້ຕັ້ງໜ້າຮ່ວມມືກັບ ພາກເໜືອລາວ ໃນວຽກງານການກໍ່ສ້າງເຂດຄວບຄຸມ-ປອດພະຍາດສັດ, ເຊິ່ງໄດ້ຮັບໝາກຜົນຕົວຈິງ, ພິເສດແມ່ນ ແຂວງຜົ້ງສາລີ ແລະເມືອງຫຼ້າ ໄດ້ຮ່ວມມືກັນກໍ່ສ້າງ ເຂດຄວບຄຸມ-ປອດພະຍາດສັດຂ້າມແດນ ເຊິ່ງໄດ້ມີໝາກຜົນຕົວຈິງໃນເບື້ອງຕົ້ນ.

2.3.3. ສອງຝ່າຍສືບຕໍ່ຊຸກຍູ້ການສ້າງຕັ້ງກົນໄກປະສານງານຮ່ວມມືວຽກງານປ່າໄມ້ ຢູ່ເຂດຊາຍແດນລາວ-ຈີນ ພ້ອມທັງຈັດກອງປະຊຸມພົບປະເປັນປະຈຳ. ເດືອນຕຸລາ ປີ 2012 ພະແນກປ່າໄມ້ແຂວງຢຸນນານ ໄດ້ຈັດຕັ້ງຄະນະເພື່ອເຂົ້າຮ່ວມກອງປະຊຸມພົບປະປະຈຳປີຄັ້ງທີ 7 ກ່ຽວກັບເຂດສະຫງວນຮ່ວມລາວ-ຈີນ ເຊິ່ງໄດ້ມີການເຊັນບົດບັນທຶກກອງປະຊຸມ, ພ້ອມທັງໄດ້ກຳນົດເຂດສະຫງວນໃໝ່ເພີ່ມອີກ 3 ແຫ່ງ.

2.3.4. ສອງຝ່າຍ ລາວ ແລະ ຈີນ ໄດ້ກຳນົດລາຍຊື່ບໍລິສັດທີ່ເຂົ້າຮ່ວມໂຄງການປູກພືດທົດແທນການປູກຝິ່ນ ເຊິ່ງມີ 2 ຊຸດ ລວມມີ 50 ກວ່າ ບໍລິສັດ. ໃນວັນທີ 1 ກໍລະກົດ 2013 ໄດ້ມີການລົງນາມຮ່ວມກັນ ໃນ "ບົດບັນທຶກຄວາມເຂົ້າໃຈ ວ່າດ້ວຍການສົ່ງເສີມການປູກພືດທົດແທນການປູກຝິ່ນ ລະຫວ່າງ ຄະນະກຳມະການແຫ່ງຊາດ ເພື່ອກວດກາ ແລະ ຄຸ້ມຄອງຢາເສບຕິດ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ແລະ ຄະນະກຳມະການແຫ່ງຊາດ ເພື່ອຄວບຄຸມຢາເສບຕິດ ສາທາລະນະລັດ ປະຊາຊົນຈີນ" ເຊິ່ງອັນນີ້ເປັນຂີດໝາຍສະແດງວ່າ ວຽກງານການປູກພືດທົດແທນການປູກຝິ່ນຂອງ ລາວ ແລະ ຈີນ ໄດ້ກ້າວເຂົ້າສູ່ ຂັ້ນຕອນການພັດທະນາອັນໃໝ່.

2.3.5. ການຮ່ວມມື ລະຫວ່າງ ສະຖາບັນຄົ້ນຄ້ວາກະສິກຳ ແລະ ປ່າໄມ້ ຂອງ ສປປ ລາວ ແລະ ສະຖາບັນວິທະຍາສາດແຂວງຢຸນນານ ສປ ຈີນ ໄດ້ຮັບການຊຸກຍູ້ຢ່າງເລິກເຊິ່ງຂຶ້ນຕື່ມ ໂດຍມີການຈັດກິດຈະກຳດ້ານວິຊາການຕ່າງໆ, ໃນປີ 2012 ໄດ້ສ້າງຕັ້ງໜ່ວຍງານວິຊາການປ້ອງກັນພືດ ໜ່ວຍທີ 5 ຂຶ້ນ, ຜ່ານການ ວິໄຈຄົ້ນຄວ້າຊອກຫາແນວພັນທີ່ມີຜົນຜະລິດສູງ ທັງແທດເໝາະກັບສະພາບທ້ອງຖິ່ນດັ່ງກ່າວ, ພ້ອມດຽວກັນນັ້ນ, ກໍ່ໄດ້ພະຍາຍາມເປີດການເຝິກອົບຮົມວິທະຍາສາດ ແລະ ເຕັກໂນໂລຊີ ກະສິກຳ,

ໃນເດືອນມີນາ ປີ 2012 ກໍ່ໄດ້ເປີດປ້າຍ "ສູນຄົ້ນຄວ້າວິໄຈຮ່ວມ ລະຫວ່າງ ສະຖາບັນວິທະຍາສາດກະສິກຳ ແລະ ປ່າໄມ້ ຂອງ ສປປ ລາວ ແລະ ສະຖາບັນວິທະຍາສາດແຂວງຢຸນນານ ສປ ຈີນ " ຢູ່ນະຄອນຫຼວງວຽງຈັນ. ຂະແໜງການ ກະສິກຳ ຂອງນະຄອນພູເອີ້ ແລະ ກົ່ງແຂວງສິບສອງພັນນາ ແຂວງຢຸນນານ ໄດ້ຕັ້ງໜ້າໃຫ້ການແນະນຳ ແລະ ບໍລິການ ດ້ານເຕັກນິກກະສິກຳ ໃຫ້ແກ່ຝ່າຍລາວ, ໄດ້ຮ່ວມມືກັນປູກເຂົ້າພັນລູກປະສົມ, ສາລີ ແລະ ພືດເສດຖະກິດອື່ນໆ, ເຊິ່ງໄດ້ເປັນການຍົກສູງລະດັບດ້ານເຕັກນິກກະສິກຳ ຂອງປະຊາຊົນທ້ອງຖິ່ນ.

2.3.6. ໂຄງການຮ່ວມມືດ້ານກະສິກຳ ທີ່ໄດ້ຕົກລົງຮ່ວມກັນກັບ 5 ແຂວງພາກເໜືອລາວ ໃນເດືອນມິຖຸນາ ປີ 2011 ແລະ ສັນຍາວ່າດ້ວຍການຮ່ວມມືປູກເຄືອໝາກນ້ຳມັນ ສິບສອງພັນນາ ລະຫວ່າງ ກະຊວງກະສິກຳ ແລະ ປ່າໄມ້ແຫ່ງ ສປປ ລາວ ແລະ ກົ່ງແຂວງສິບສອງພັນນາ ແຂວງຢຸນນານ ສປ ຈີນ ໃນວັນທີ 1 ພຶດສະພາ 2012 ແລະ ບົດບັນທຶກອື່ນໆ ທີ່ກ່ຽວພັນເຖິງການຮ່ວມມືປູກເຄືອໝາກນ້ຳມັນ ເຊິ່ງໄດ້ຮັບການຊຸກຍູ້ຈັດຕັ້ງປະຕິບັດເຊັ່ນ: ດຳເນີນການສາທິດແນວພັນ, ສົ່ງເສີມເຕັກນິກ ແລະ ເຝິກອົບຮົມພະນັກງານ ຢູ່ພາຍໃນສວນສາທິດແຂວງອຸດົມໄຊ, ໄດ້ຮ່ວມກັບພະແນກກະສິກຳ-ປ່າໄມ້ແຂວງອຸດົມໄຊ ກໍ່ສ້າງສິ່ງອຳນວຍຄວາມສະດວກໃນການປຸງແຕ່ງສະບຽງອາຫານ, ສາງເກັບມ້ຽນ ແລະ ອື່ນໆ ຢູ່ໃນສວນສາທິດດັ່ງກ່າວ; ຮ່ວມກັບພະແນກກະສິກຳ ແລະ ປ່າໄມ້ ແຂວງຜົ້ງສາລີ ກໍ່ສ້າງສູນບໍລິການເຕັກນິກ-ວິທະຍາສາດ ກະສິກຳ; ໄດ້ຮ່ວມກັບພະແນກກະສິກາ ແລະ ປ່າໄມ້ ແຂວງຜົ້ງສາລີ ແລະ ແຂວງອຸດົມໄຊ ໃນການຮ່ວມມືກັນກໍ່ສ້າງສວນສາທິດ ເຄືອໝາກນ້ຳມັນສິບສອງພັນນາ; ສ້າງສວນສາທິດ ການນຳໃຊ້ເຄື່ອງຈັກທຸກຂັ້ນຕອນ ເພື່ອປູກເຂົ້າຄຸນນະພາບສູງ ຢູ່ບ້ານນາສ້າວ ເມືອງໄຊ ແຂວງອຸດົມໄຊ, ໄດ້ຮ່ວມມືປ້ອງກັນ ແລະ ຄວບຄຸມສັດຕາມເຂດຊາຍແດນ.

2.3.7. ຂະແໜງການກະສິກຳ-ປ່າໄມ້ ແລະ ບໍລິສັດ ນະຄອນພູເອີ້ ໄດ້ທຳການທົດລອງປູກ ໝາກມາຄາດາເມຍນັດ ແລະ ໄມ້ໃຫ້ໝາກ, ຢູ່ສາມແຂວງໝາກເໜືອລາວ ຄື: ແຂວງຊຽງຂວາງ, ຫຼວງພະບາງ ແລະ ແຂວງວຽງຈັນ.

## 2.4. ກຸ່ມຮ່ວມມືດ້ານການລົງທຶນ, ດ້ານພະລັງງານ, ບໍ່ແຮ່ ແລະ ແຮ່ທາດ.

2.4.1. ວິສາຫະກິດຂອງແຂວງຢຸນນານຈຳນວນໜຶ່ງທີ່ໄດ້ລົງທຶນ ແລະ ປະຕິບັດໂຄງການ ເຫັນວ່າມີຄວາມຄືບໜ້າ ແລະ ມີຄວາມສະດວກ. ໂຄງການກໍ່ສ້າງໂຮງແຮມລີສອດສາກົນ ທີ່ແຂວງຫຼວງພະບາງ ສປປ ລາວ ໂດຍແມ່ນກຸ່ມບໍລິສັດ ທອງແດງຢຸນນານ ເປັນຜູ້ກໍ່ສ້າງ, ປະຈຸບັນໄດ້ສຳເລັດວຽກງານກະກຽມໂດຍພື້ນຖານແລ້ວ ແລະ ກຳລັງຈະເຂົ້າສູ່ຂັ້ນຕອນການກໍ່ສ້າງ. ໂຄງການກໍ່ສ້າງໂຮງງານຊີມັງວັງວຽງຫຼັງທີ 2 ພາກຂະຫຍາຍຂອງບໍລິສັດຊີມັງລາວວັງວຽງຈຳກັດ ແລະ ການປັບປຸງການຖືຫຸ້ນຂອງຝ່າຍລາວຖືຫຸ້ນ ຈາກ 40% ເປັນ 49%, ຝ່າຍຈີນ ຈາກ 60% ເປັນ 51% ໄດ້ອະນຸມັດ ຈາກ ລັດຖະບານ ສປປ ລາວຢ່າງເປັນທາງການແລ້ວ.

2.4.2. ການຊື້-ຂາຍດ້ານພະລັງງານໄຟຟ້າ ໄດ້ມີການເພີ່ມຂຶ້ນຢ່າງຕໍ່ເນື່ອງ, ນັບຕັ້ງແຕ່ເດືອນມັງກອນ ປີ 2012 ຫາ ກໍລະກົດ ປີ 2013, ໄດ້ສົ່ງໄຟຟ້າເຂົ້າ 4 ແຂວງພາກເໜືອລາວ ມີແຂວງຫຼວງນ້ຳທາ, ແຂວງອຸດົມໄຊ, ແຂວງຫຼວງພະບາງ, ແຂວງໄຊຍະບູລີ; ລວມການນຳສົ່ງໄຟຟ້າອອກທັງໝົດ 240 GWh. ວິສາຫະກິດຂັ້ນສູນກາງ ແລະ ວິສາຫະກິດຂອງແຂວງ ກໍ່ໄດ້ມີຄວາມຕັ້ງໜ້າ ໃນການເຂົ້າຮ່ວມ ກິດຈະກຳ ກໍ່ສ້າງເຂື່ອນໄຟຟ້າ ຢູ່ພາຍໃນປະເທດລາວ, ລວມກຳລັງຕິດຕັ້ງທີ່ກຳລັງກໍ່ສ້າງ ເກືອບເຖິງ 1000 Mw. ກຸ່ມບໍລິສັດເຕືອິນ ແລະ ບໍລິສັດເອກະຊົນອື່ນໆ ກໍ່ໄດ້ສຳເລັດການກໍ່ສ້າງສວນປູກໝາກເຍົາ, ມັນຕົ້ນ ແລະ ພືດພະລັງງານອື່ນໆ. ໃນເດືອນພະຈິກ 2012, ພະນັກງານທີ່ກ່ຽວຂ້ອງ ດ້ານ

ພະລັງງານຂອງແຂວງ ພາກເໜືອລາວ ກໍໄດ້ເຂົ້າຮ່ວມ " ຊຸດເຝິກອົບຮົມການນໍາໃຊ້ ແລະ ພັດທະນາ ພະລັງງານທົດແທນ GMS " ທີ່ຈັດຂຶ້ນຢູ່ ນະຄອນຄຸນມິງ.

2.4.3. ບໍລິສັດຕາຂ່າຍໄຟຟ້າແຂວງຢຸນນານ ເປັນຜູ້ຈັດຕັ້ງປະຕິບັດໂຄງການກໍ່ສ້າງຕາຂ່າຍໄຟຟ້າ 230 KV ພາກເໜືອລາວ ທີ່ໄດ້ເຊັນສັນຍາໂຄງການຢ່າງເປັນທາງການໃນ ເດືອນມີນາ ປີ 2013, ການກໍ່ສ້າງຕາຂ່າຍໄຟຟ້າຫຼັກ ຢູ່ພາກເໜືອແຕ່ແຂວງຫຼວງພະບາງຂຶ້ນໄປ ທີ່ມີລະດັບແຮງດັນ 230 KV, ລວມທັງສາຍສົ່ງໄຟຟ້າໃໝ່ 5 ແຫ່ງ ແລະ ສະຖານີໄຟຟ້າໃໝ່ອີກ 4 ແຫ່ງ, ເຊິ່ງຄາດຄະເນວ່າ ຈະສໍາເລັດພາຍໃນ ທ້າຍປີ 2015 ນີ້. ໂດຍໄດ້ຮັບການມອບໝາຍຈາກ ບໍລິສັດຕາໜ່າງໄຟຟ້າ ແຂວງຢຸນນານ, ບໍລິສັດສະໜອງພູເອີ ໃນເດືອນມິຖຸນາ 2012 ໄດ້ສໍາເລັດເລີ່ມຕິດຕັ້ງສາຍສົ່ງ ກໍາລັງແຮງ 35 Kv ແຕ່ນະຄອນພູເອີ້ເຖິງເມືອງຍອດອູ ແຂວງຜົ້ງສາລີ, ລວມຄວາມຍາວທັງໝົດ 10,9 ກິໂລແມັດ.

2.4.4. ບັນດາບໍລິສັດແຂວງຢຸນນານທີ່ໄດ້ຮັບອະນຸຍາດຊອກຄົ້ນສໍາຫຼວດ, ຂຸດຄົ້ນແຮ່ທາດ, ປູງແຕ່ງ ແລະ ຂົນສົ່ງຢູ່ ສປປ ລາວ ໄດ້ຮັບການຈັດຕັ້ງປະຕິບັດຕາມສັນຍາທີ່ວາງໄວ້ ເຊັ່ນ: ກົມທໍລະນີສາດແຮ່ທາດມີສີ ແຂວງຢຸນນານ, ບໍລິສັດການລົງທຶນພັດທະນາແຮ່ທາດລາວ-ຈີນ ແຂວງຢຸນນານ ຈໍາກັດ, ບໍລິສັດຄົມມະນາຄົມຂົນສົ່ງນິກຍຸງຄໍາ, ບໍລິສັດ ເລ່ທິງ ເມືອງລານຊາງ ຈໍາກັດ, ບໍລິສັດ ຈຽງເສີງເຈົ້ງຫຼຽງ ເສດຖະກິດ-ການຄ້າຈໍາກັດ ແລະ ບໍລິສັດອື່ນໆ.

## 2.5. ການຮ່ວມມືດ້ານວັດທະນະທໍາ ແລະ ທ່ອງທ່ຽວ

2.5.1. ຄະນະກໍາມະການສົ່ງເສີມການທ່ອງທ່ຽວຂອງແຂວງຢຸນນານ ໄດ້ຈັດກອງປະຊຸມພົບປະສົ່ງເສີມການທ່ອງທ່ຽວ ຂຶ້ນທີ່ແຂວງຫຼວງພະບາງ ສປປ ລາວ ໃນ ເດືອນມີນາ ປີ 2012, ໄດ້ເຊື້ອເຊີນເອົາຜູ້ຕາງໜ້າຂອງ ພະແນກການທ່ອງທ່ຽວ ແລະ ວິສາຫະກິດການທ່ອງທ່ຽວ ຂອງ ພາກເໜືອ ສປປ ລາວ, ເພື່ອເຂົ້າຢ້ຽມຊົມງານວັດທະນະທໍາທ່ອງທ່ຽວສາກົນ ປີ 2012 ແລະ ປີ 2013 ທີ່ຈັດຂຶ້ນຢູ່ ແຂວງຢຸນນານ ສປ ຈີນ, ສໍາຫຼວດສຶກສາຊັບພະຍາກອນທ່ອງທ່ຽວ ແລະ ຜະລິດຕະພັນການທ່ອງທ່ຽວ ຂອງແຂວງຢຸນນານ.

2.5.2. ກົງແຂວງສິບສອງພັນນາຖືຄວາມສໍາຄັນການຊຸກຍູ້ການກໍ່ສ້າງ "ເຂດການທ່ອງທ່ຽວສາກົນ" ເຂດຊາຍແດນ ລາວ, ຈີນ ແລະ ໄທ, ເປັນການຊຸກຍູ້ການພັດທະນາການທ່ອງທ່ຽວຕາມຊາຍແດນໄປອີກບາດກ້າວໜຶ່ງ ເຊິ່ງໄດ້ເປີດເສັ້ນທາງທ່ອງທ່ຽວ 5 ວັນ ຊຽງຮຸ່ງ ຫາ ຫຼວງພະບາງ ແລະ ເສັ້ນທາງທ່ອງທ່ຽວຕາມຊາຍແດນ ສິບສອງພັນນາ ແລະ ພາກເໜືອລາວ ລວມມີ 5 ເສັ້ນ; ການອອກບັດໃຫ້ແກ່ນັກທ່ອງທ່ຽວພາຍໃນ ແຂວງຢຸນນານ ທີ່ຈະອອກໄປທ່ອງທ່ຽວຕາມຊາຍແດນສິບສອງພັນນາ; ເຊິ່ງໃນເດືອນກໍລະກົດ ປີ 2012 ກໍໄດ້ເຊັນສັນຍາ " ການຮ່ວມມືດ້ານການທ່ອງທ່ຽວ ລະຫວ່າງ ພະແນກຖະແຫຼງຂ່າວ, ວັດທະນະທໍາ ແລະ ທ່ອງທ່ຽວ ແຂວງຫຼວງພະບາງ ສປປ ລາວ ແລະ ກົມທ່ອງທ່ຽວກົງແຂວງສິບສອງພັນນາ ແຂວງ ຢຸນນານ ສປ ຈີນ". ອົງການທ່ອງທ່ຽວກົງແຂວງສິບສອງພັນນາຮ່ວມມືກັບ ບໍລິສັດການທ່ອງທ່ຽວສາກົນ Jing Lan ໄດ້ຈັດຕັ້ງຄະນະທີ່ບໍ່ແມ່ນລັກສະນະທຸລະກິດເຂົ້າມາຢ້ຽມຊົມທ່ອງທ່ຽວ ແຂວງຫຼວງພະບາງ ສປປ ລາວ ຈໍານວນ 12 ເທື່ອ ເພື່ອເພີ່ມທະວີການໂຄສະນາສົ່ງເສີມ ສາຍການບິນຫຼວງພະບາງ-ສິບສອງພັນນາ.

2.5.3. ນັບຕັ້ງແຕ່ເດືອນກັນຍາ 2011 ເປັນຕົ້ນມາ, ຄະນະພັດທະນາທ່ອງທ່ຽວນະຄອນພູເອີ ໄດ້ລົງນາມໃນສັນຍາຮ່ວມມືດ້ານການທ່ອງທ່ຽວ ຮ່ວມກັບພະແນກທ່ອງທ່ຽວແຂວງຫຼວງພະບາງ, ອຸດົມໄຊ ແລະ ຜົ້ງສາລີ. ພ້ອມທັງດໍາເນີນກອງປະຊຸມເປີກສາຫາລືກ່ຽວກັບການສ້າງຈຸດພັກລົດ (caravan park) ພາກເໜືອລາວ ຂອງ ກຸ່ມບໍລິສັດປັກກິ່ງຈິງຄຸນ. ໂດຍຜ່ານການຈັດງານບຸນໂຍນຖົງສາມປະເທດ ລາວ,

ຈີນ ແລະ ທວຽດ, ເຊື້ອເຊີນຄະນະຜູ້ແທນຈາກ ສປປ ລາວ ເຂົ້າຮ່ວມງານມະຫະກຳຊຸມນຸມໃຫຍ່ອຸດສາຫະກຳຊາ ສາກົນ 2013 ໃນຊ່ວງເທດສະການຊາພູເອີ ຈີນ ຄັ້ງທີ 13 ແລະ ງານບຸນທ່ອງທ່ຽວວັດທະນະທຳນະຄອນພູເອີ້ ທີ່ ຈັດຂຶ້ນ 2 ປີເທື່ອໜຶ່ງ, ເພື່ອສົ່ງເສີມການຮ່ວມມື ແລະ ແລກປ່ຽນດ້ານການທ່ອງທ່ຽວ ຢູ່ພາກເໜືອລາວ ກັບ ນະຄອນພູເອີ.

## 2.6. ກຸ່ມຮ່ວມມືດ້ານໂຍທາທິການ, ຂົນສົ່ງ, ໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ.

2.6.1. ພາຍໃຕ້ການເອົາໃຈໃສ່ຂອງສອງຝ່າຍ, ໃນເດືອນພະຈິກ 2012 ຂະແໜງການຄົມມະນາຄົມ ແລະ ຂົນສົ່ງຂອງສອງປະເທດ ໄດ້ອະນຸມັດເປີດເສັ້ນທາງຂົນສົ່ງສາກົນຜົ້ງສາລີ-ເມືອງຈຽງເສີງ, ຍອດອູ-ຈຽງເສີງ ໂດຍຜ່ານດ່ານເມືອງລານຕຸຍ-ເມືອງຄັ໊ງ, ປະຈຸບັນບໍລິສັດການຂົນສົ່ງຂອງ ຝ່າຍຈີນແມ່ນກຳລັງຍື່ນຄຳຮ້ອງສະເໜີເພື່ອເປີດສາຍບໍລິການຂົນສົ່ງໂດຍສານສິນຄ້າ 2 ສາຍ ທີ່ກ່າວມາຂ້າງເທິງນັ້ນ. ນັບທັງເສັ້ນທາງຂົນສົ່ງສາກົນ 15 ເສັ້ນ ຜ່ານດ່ານ ບໍ່ຫານ-ບໍ່ເຕັນ ທີ່ໄດ້ເປີດນຳໃຊ້ແລ້ວ, ເພື່ອໃຫ້ເສັ້ນທາງຂົນສົ່ງສາກົນ ຈາກແຂວງຢຸນນານ ແລະ ພາກເໜືອຂອງລາວ, ລວມກັນແລ້ວມີທັງໝົດ 17 ສາຍ.

ບໍລິສັດຄົມມະນາຄົມຂົນສົ່ງແຂວງຢຸນນານ ແລະ ບໍລິສັດທົ່ງລີ່ ນະຄອນຫຼວງວຽງຈັນ, ໄດ້ເພີ່ມຖ້ຽວໂດຍສານຈາກສາມມື້ຕໍ່ 1 ຖ້ຽວ ໄດ້ເພີ່ມອີກໜຶ່ງຖ້ຽວໃນແຕ່ລະທ້າຍອາທິດ.

ບໍລິສັດການບິນລາວ ໄດ້ເປີດສາຍການບິນໃໝ່ ຫຼວງພະບາງ-ຄຸນໝິງ, 2 ຖ້ຽວ ຕໍ່ ອາທິດ.

2.6.2. ສອງຝ່າຍໄດ້ຮ່ວມກັນຊຸກຍູ້ເພື່ອໃຫ້ຂົວມິດຕະພາບ ຫ້ວຍຊາຍ-ຊຽງຂອງ ໄດ້ເປີດນຳໃຊ້ຢ່າງເປັນທາງການໃນປີ 2013. ບໍລິສັດຂົວທາງຢຸນນານຊັນນີ ຈຳກັດ ໄດ້ສຳເລັດການຮັບເໝົາກໍ່ສ້າງ ໄລຍະທີ 1 (ນາເຕີຍ-ເມືອງໄຊ)ໂຄງການປັບປຸງເສັ້ນທາງເລກ 13 ເໜືອ ນາເຕີຍ-ປາກມອງ ທີ່ຈີນຊ່ວຍເຫຼືອນັ້ນໄດ້ຕາມເງື່ອນໄຂ ແລະ ເນື້ອໃນຂອງສັນຍາທຸກຢ່າງງສະດວກສະບາຍ. ໃນເດືອນມີນາ ປີ 2012 ໄດ້ຜ່ານການກວດກາ ແລະ ຮັບຮອງຈາກຜູ້ຊ່ຽວຊານຝ່າຍຈີນ ແລະ ເດືອນມິຖຸນາ ປີ 2012 ໄດ້ຮັບການກວດກາ ແລະ ຮັບຮອງຈາກຜູ້ຊ່ຽວຊານຝ່າຍລາວ ແລະ ຈະສືບຕໍ່ກໍ່ສ້າງໄລຍະທີ 2(ເມືອງໄຊ-ປາກມອງ).

2.6.3. ບໍລິສັດຂົວທາງຢຸນນານຊັນນີ ຈຳກັດ, ຄາດວ່າຈະຮັບເໝົາໂຄງການກໍ່ສ້າງທ່າເຮືອຕາມລຳນ້ຳຂອງ 03 ແຫ່ງຄື: ທ່າເຮືອປາກແບງ, ບ້ານຊຽງກົກ, ບ້ານຄົກຈອງ.

- ບໍລິສັດວິສາວະກຳກໍ່ສ້າງຢຸນນານໄດ້ເຊັນ MOU ເພື່ອການສຶກສາປັບປຸງຂະຫຍາຍເສັ້ນທາງ 13 ແຕ່ວຽງຈັນ-ຫຼວງພະບາງ.
- ບໍລິສັດກໍ່ສ້າງຂົວ-ທາງຢຸນນານ ໄດ້ທຳການສຳຫຼວດອອກແບບ ເພື່ອກໍ່ສ້າງເສັ້ນທາງຫຼວງແຫ່ງຊາດເລກ 5 (ນາມອນ-ລາດຮ່ວງ ຊຽງຂວາງ).

2.6.4. ພາຍໃຕ້ການເອົາໃຈໃສ່ຂອງສອງຝ່າຍຮ່ວມກັນຊຸກຍູ້ໃຫ້ປະເທດໄທ ພິຈາລະນາອະນຸມັດ ອະນຸສັນຍາໃນການຂົນສົ່ງໂດຍສານສິນຄ້າໃນເຂດອະນຸພາກພື້ນແມ່ນ້ຳຂອງ ໃຫ້ໄວຂຶ້ນ.

2.6.5. ບໍລິສັດ ETL ຂອງລາວ ແລະ ບໍລິສັດໂທລະຄົມຈີນ ໄດ້ຮ່ວມກັນສ້າງລະບົບສາຍແກ້ວໄຍແສງ (ນາເຕີຍ-ເມືອງລ້າ) ແລະ ໄດ້ສ້າງລະບົບສາຍແກ້ວໄຍແສງເລກ 1 ຂຶ້ນ ລະຫວ່າງ ບໍລິສັດໂທລະຄົມຈີນ ແລະ ບໍລິສັດ LTC (ຫຼວງນ້ຳທາ-ເມືອງລ້າ). ບໍລິສັດລາວໂທລະຄົມ ກັບ ບໍລິສັດ China Unicom ໄດ້ລົງທຶນຮ່ວມກັນສ້າງລະບົບສາຍແກ້ວໄຍແສງລາວ-ຈີນ, ລະບົບສື່ສານສາກົນເມືອງລ້າຂອງ China Unicom ແລະ ໂຄງການຮ່ວມມືດ້ານສື່ສານອື່ນໆ ໄດ້ດຳເນີນໄປຢ່າງສະດວກ.

## 2.7. ກຸ່ມຮ່ວມມືດ້ານການສຶກສາ, ວິທະຍາສາດ-ເຕັກນິກ ແລະ ສາທາລະນະສຸກ.

2.7.1. ກະຊວງສຶກສາທິການ ແລະ ກິລາ ສປປ ລາວ ແລະ ພະແນກສຶກສາ ແຂວງຢູນນານ ໄດ້ເຊັນສັນຍາຮ່ວມມືກັນ ເພື່ອຊອກຫາການຮ່ວມມືກັນໃນຫຼາຍໆດ້ານຕື່ມອີກ; ໃນປີ 2013 ພະແນກສຶກສາແຂວງຢູນນານ ໄດ້ສ້າງຕັ້ງ "ຫ້ອງການຂອງສຳນັກງານຮ່ວມມືການສຶກສາສາກົນ ແຂວງຢູນນານ ປະຈຳຢູ່ລາວ", ດຳເນີນວຽກງານກ່ຽວກັບການແນະນຳການສຶກສາຂອງແຂວງຢູນນານ, ເພື່ອສະໜອງການບໍລິການໃຫ້ແກ່ການຮ່ວມມື ແລະ ແລກປ່ຽນ ວຽກງານການສຶກສາຂອງລາວ ກັບ ແຂວງຢູນນານ. ເປັນການປະສານງານ-ຊ່ວຍເຫຼືອໂຮງຮຽນຂອງແຂວງຢູນນານໃນການເປີດຮັບ ນັກຮຽນລາວ, ຊ່ວຍເຫຼືອໃນການປະກອບເອກະສານເຂົ້າຮຽນຕ່າງໆໃຫ້ບັນດານັກສຶກສາໃນທຸກລະດັບທີ່ແຂວງຢູນນານ, ສ້າງສູນເຝິກອົບຮົມພາສາຈີນ ຢູ່ໃນລາວເປັນຕົ້ນ. ໃນເດືອນ12 ຕຸລາ ປີ 2013, ທ່ານລັດຖະມົນຕີຊ່ວຍວ່າການກະຊວງສຶກສາທິການ ແລະ ກິລາ ໄດ້ນຳພາຄະນະເດີນທາງໄປຢ້ຽມຢາມແຂວງຢູນນານ ແລະ ໄດ້ເຊັນສັນຍາຮ່ວມມືກັບພະແນກສຶກສາແຂວງຢູນນານ. ຈະຮ່ວມກັນສ້າງລາຍການໂທລະພາບການສຶກສາ. ເດືອນເມສາ ປີ 2013, ແຂວງຢູນນານໄດ້ຈັດຊຸດເຝິກອົບຮົມໃຫ້ພະນັກງານຫຼັກແຫຼ່ງຂັ້ນຫ້ອງການ ແລະ ກົມ ຈຳນວນ 30 ທ່ານ ຢູ່ນະຄອນຄຸນໝິງ.

2.7.2. ປີ 2011-2013 ມີນັກສຶກສາລາວໄດ້ຮັບທຶນຈາກລັດຖະບານ ສປ ຈີນ ໄປສຶກສາຢູ່ແຂວງຢູນນານຈຳນວນທັງໝົດ 65 ຄົນ, ທຶນການສຶກສາລວມເປັນເງິນທັງໝົດ 2.660.000 ຢວນ ພ້ອມກັນນັ້ນ ປີ 2011-2013 ມີນັກສຶກສາລາວ ຈຳນວນ 112 ຄົນ ທີ່ໄດ້ຮັບທຶນການສຶກສາຂອງແຂວງຢູນນານ, ລວມມູນຄ່າທັງໝົດ 3.360.000 ຢວນ.

ອຳນາດການປົກຄອງນະຄອນພູເອີ້ ໄດອອກທຶນ 5 ລ້ານຢວນ ເພື່ອຈັດຊຸດຝຶກອົບຮົມ 3 ຊຸດ ໃຫ້ແກ່ນັກສຶກສາແຂວງຜົ້ງສາລີ ຈຳນວນ 60 ຄົນ, ອອກທຶນ 2 ລ້ານຢວນ ເພື່ອຈັດຊຸດຝຶກອົບຮົມໃຫ້ແກ່ນັກສຶກສາແຂວງ ຫຼວງພະບາງ ຈຳນວນ 20 ຄົນ

ໃນປີ 2013 ພະແນກສຶກສາ ແຂວງຢູນນານ ລິເລີ່ມໂຄງການເຝິກອົບຮົມພະນັກງານ ແປພາສາລາວ-ຈີນ ແລະ ຈີນ-ລາວ, ຈຳນວນນັກສຳມະນາກອນເຂົ້າຮ່ວມທັງໝົດ 50 ຄົນ, ໃນນັ້ນສປປ ລາວ ແລະ ແຂວງຢູນນານ ຝ່າຍລະ 25 ຄົນ.

2.7.3. ມະຫາວິທະຍາໄລແຫ່ງຊາດລາວ ໄດ້ຮ່ວມກັບ ຄະນະເສດຖະສາດ ແລະ ການບໍລິຫານ ຂອງມະຫາວິທະຍາໄລວິທະຍາສາດ-ເຕັກໂນໂລຊີຄຸນໝິງ ເປີດຫຼັກສູດປະລິນຍາໂທ "ການຄຸ້ມຄອງການເງິນສາກົນ" ແລະ ຫຼັກສູດປະລິນຍາເອກ "ການຄຸ້ມຄອງວິທະຍາສາດ ແລະ ໂຄງການ". ໃນແຕ່ລະປີ, ວິທະຍາຄານຕຳຫຼວດແຂວງຢູນນານ ໄດ້ຈັດເຝິກອົບຮົມກ່ຽວກັບການປະຕິບັດກົດໝາຍຕ້ານຢາເສບຕິດໃຫ້ແກ່ຕຳຫຼວດລາວ ຈຳນວນ 30 ທຶນ, ໃນປີ 2012 ໄດ້ບໍລິຈາກເຄື່ອງຄອມພິວເຕີ ຈຳນວນ 50 ເຄື່ອງໃຫ້ແກ່ວິທະຍາຄານຕຳຫຼວດລາວ. ມະຫາວິທະຍາໄລແພດສາດຢູນນານ ໄດ້ສົ່ງນັກສຶກສາດີເດັ່ນທີ່ຫາກໍ່ຈົບໃໝ່ໆ ມາສຶກສາຄົ້ນຄວ້າລະດັບປະລິນຍາໂທຢູ່ຄະນະພະຍາດເຂດຮ້ອນ, ວິທະຍາໄລເຕັກນິກວິຊາຊີບກົ່ງແຂວງສິບສອງພັນນາ ແລະ ມະຫາວິທະຍາໄລສຸພານຸວົງ ໄດ້ຮ່ວມກັນເຊັນບົດບັນທຶກຄວາມເຂົ້າໃຈການຮ່ວມມືຂອງສອງຝ່າຍ, ໂດຍໄດ້ມີການສະໜອງການຊ່ວຍເຫຼືອດ້ານການຮຽນ-ການສອນພາສາຈີນໃຫ້ຝ່າຍລາວ, ມະຫາວິທະຍາໄລສຸພານຸວົງໄດ້ສະໜອງສະຖານທີ່ການເຝິກຫັດຕົວຈິງໃຫ້ແກ່ນັກສຶກສາຈີນ ຂອງວິທະຍາໄລເຕັກນິກວິຊາຊີບກົ່ງແຂວງສິບສອງພັນນາທີ່ຮຽນພາສາລາວ. ວິທະຍາໄລເຕັກນິກຊັບພະຍາກອນແຜ່ນດິນແຂວງຢູນນານ ໄດ້ເຊັນສັນຍາກັບລັດຖະບານລາວກ່ຽວກັບການຈັດເຝິກອົບຮົມ ເພື່ອສ້າງຄວາມສາມາດຂອງບຸກຄະລາກອນດ້ານທໍລະນີສາດ ແລະ ບໍ່ແຮ່ໃຫ້ແກ່ຝ່າຍລາວ.

2.7.4. ເດືອນມີນາ 2013, ກະຊວງວິທະຍາສາດ ແລະ ເຕັກໂນໂລຊີລາວ ຮ່ວມກັບ ພະແນກ ວິທະຍາສາດ ເຕັກໂນໂລຊີແຂວງຢຸນນານ ກົມແຜນການ ແລະ ການຮ່ວມມື ເຊັນສັນຍາຮ່ວມມືສອງຝ່າຍດ້ານ ວິທະຍາສາດ-ເຕັກນິກ, ສັນຍາໄດ້ລະບຸວຽກງານສຳຄັນໃນການຮ່ວມມືດ້ານວິທະຍາສາດ-ເຕັກນິກ ຂອງສອງຝ່າຍ.

2.7.5. ພະແນກວິທະຍາສາດ ແລະ ເຕັກໂນໂລຊີແຂວງຢຸນນານ ສະໜັບສະໜູນ ບໍລິສັດ ຈົງກູ ການຄ້າຊາຍແດນກິ່ງແຂວງສິບສອງພັນນາ ແລະ ກຸ່ມບໍລິສັດນຳເຂົ້າ-ສົ່ງອອກຜະລິດຕະພັນ ຢຸນນານ ຫຸ້ນສ່ວນຈຳກັດ ສ້າງຕັ້ງ "ສວນສາທິດດ້ານວິທະຍາສາດ ແລະ ເຕັກໂນໂລຊີ ລະຫວ່າງ ແຂວງຫຼວງນ້ຳທາ ສປປ ລາວ ແລະ ແຂວງຢຸນນານ ສປ ຈີນ" ແລະ "ສວນສາທິດດ້ານວິທະຍາສາດ ແລະ ເຕັກໂນໂລຊີ ລະຫວ່າງ ແຂວງຢຸນນານ ສປ ຈີນ ແລະ ແຂວງບໍລິຄຳໄຊ ສປປ ລາວ" ພ້ອມທັງໄດ້ຮັບການຢັ້ງຢືນເປັນພື້ນທີ່ຮ່ວມມືດ້ານເຕັກນິກວິທະຍາສາດຢູ່ຕ່າງປະເທດ ຈາກແຂວງຢຸນນານໃນຊຸດທຳອິດ.

2.7.6. ໃນປີ 2012, ສູນບໍລິການເຕັກນິກຊົນນະບົດແຂວງຢຸນນານ ຮ່ວມກັບ ສູນບໍລິການການແລກປ່ຽນວິທະຍາສາດ - ເຕັກໂນໂລຊີ ນະຄອນພູເອີ-ຊຽງໄຮ້ ໄດ້ສ້າງ "ສູນພັດທະນາເຕັກນິກວິທະຍາສາດ ລາວ-ຢຸນນານ" ທີ່ແຂວງຫຼວງພະບາງ, ຈຸດປະສົງຕົ້ນຕໍແມ່ນການໃຫ້ບໍລິການເປີກສາເຕັກນິກ ແລະ ເຝິກອົບຮົມການປູກພືດເສດຖະກິດ, ການປ້ອງກັນສັດຕູພືດ, ການບໍລິການວຽກງານສາທິດທົດລອງປູກພືດກະສິກຳຊະນິດໃໝ່ເປັນຕົ້ນ.

2.7.7. ພາກສ່ວນ ສາທາລະນະສຸກນະຄອນພູເອີ້ ແລະ ກິ່ງແຂວງສິບສອງພັນນາ ຕ່າງກໍ່ໄດ້ຮ່ວມກັນສ້າງກົນໄກປະສານງານປ້ອງກັນ ແລະ ຄວບຄຸມພະຍາດລະບາດຂອງສອງຝ່າຍໃນນັ້ນມີ ລະບອບການແຈ້ງການເປີກສາ ກ່ຽວກັບພະຍາດຂອງທັງສອງຝ່າຍ, ລະບອບການປະສານຮ່ວມກ່ຽວກັບການຄຸ້ມຄອງຂໍ້ມູນຂ່າວສານສະພາບພະຍາດລະບາດ, ຮັດແໜ້ນການກວດກາພະຍາດລະບາດຢູ່ເຂດຊາຍແດນເປັນຕົ້ນແມ່ນພະຍາດເອດ, ໄຂ້ຍຸງ, ໄຂ້ເລືອດອອກ, ເພື່ອຮັບປະກັນຄວາມປອດໄພ ດ້ານສາທາລະນະສຸກ ແລະ ການປິ່ນປົວພະຍາດ ຢູ່ເຂດຊາຍແດນ.

2.7.8. ກະຊວງ ວິທະຍາສາດ ແລະ ເຕັກໂນໂລຊີ ສະຖາບັນພະລັງງານທົດແທນ ແລະ ວັດສະດຸໃໝ່ ແລະ ມະຫາວິທະຍາໄລສ້າງຄູຢຸນນານ. ໄດ້ລົງນາມໃນສັນຍາການຮ່ວມມື ວ່າດ້ວຍການສ້າງຫ້ອງທົດລອງຮ່ວມ ສຳລັບການນຳໃຊ້ ແລະ ພັດທະນາດ້ານພະລັງງານທົດແທນລາວ-ຈີນ. ນອກຈາກນີ້ຝ່າຍຈີນຈະຊ່ວຍພິຈາລະນາ ໂຄງການນຳໃຊ້ເຕັກໂນໂລຊີຊີວະພາບ ເຂົ້າໃນການປາບສັດຕູພືດ ຂອງແຂວງອຸດົມໄຊ.

## 2.8. ກຸ່ມຮ່ວມມືດ້ານວຽກງານຊາຍແດນ, ດ່ານເຂົ້າ-ອອກເມືອງ, ແຮງງານ ແລະ ປ້ອງກັນຄວາມສະຫງົບ.

2.8.1. ສ້າງຕັ້ງກົນໄກພົວພັນດ້ານການປົກປັກຮັກສາຄວາມສະຫງົບຮ່ວມກັນ: ການປ້ອງກັນ ແລະ ສະກັດກັ້ນ ຄົນເຂົ້າເມືອງທີ່ຜິດກົດໝາຍ, ອາດຊະຍາກຳຂ້າມຊາດ, ຄຸ້ມຄອງຊາຍແດນ ແລະ ອື່ນໆ ໄດ້ຮັບການເພີ່ມທະວີອີກບາດກ້າວໜຶ່ງ, ການຮ່ວມມືໃນວຽກງານປ້ອງກັນຄວາມສະຫງົບໄດ້ ປະກົດຜົນເປັນຈິງ ແລະ ມີປະສິດທິຜົນ. 6 ເດືອນທ້າຍປີ 2012 ກົມຕຳຫຼວດກິ່ງແຂວງສິບສອງພັນນາ ໄດ້ມີການພົບປະເຮັດວຽກນຳກອງບັນຊາການຂອງ 5 ແຂວງພາກເໜືອໄດ້ແກ່ແຂວງຫຼວງນ້ຳທາ, ແຂວງຜົ້ງສາລີ, ບໍ່ແກ້ວ, ອຸດົມໄຊ ແລະ ຫຼວງພະບາງ, ພ້ອມທັງເຊັນບົດບັນທຶກກົນໄກປະສານງານຮ່ວມວຽກງານຕຳຫຼວດ, ເພື່ອສ້າງເປັນກົນໄກຮ່ວມມືວຽກງານຕຳຫຼວດ.

ກອງບັນຊາການປ້ອງກັນຄວາມສະຫງົບ ແຂວງຜົ້ງສາລີ ແລະ ກົມຕຳຫຼວດນະຄອນພູເອີ້; ກອງບັນຊາການປ້ອງກັນຄວາມສະຫງົບເມືອງຍອດອູ ແລະ ກົມຕຳຫຼວດເມືອງຈຽງເສີງ ໄດ້ສ້າງຕັ້ງກົນໄກຮ່ວມມືດ້ານວຽກງານຕຳຫຼວດໂດຍມີການຮ່ວມກັນຈັດກອງປະຊຸມສາມັນປະຈຳປີ.

2.8.2. ວັນທີ 10 ທັນວາ 2011, ນັບແຕ່ມີການຮ່ວມມືປະຕິບັດກົດໝາຍປ້ອງກັນຄວາມສະຫງົບຕາມລຳແມ່ນ້ຳຂອງເປັນຕົ້ນມາ, ພາຍໃຕ້ການສະໜັບສະໜູນ ແລະ ຊ່ວຍເຫຼືອຈາກຕຳຫຼວດ ແລະ ທະຫານຂອງຝ່າຍລາວ, ສອງຝ່າຍໄດ້ຮ່ວມກັນປະຕິບັດກົດໝາຍກວດກາລາດຕະເວນຢ່າງເຂັ້ມງວດ ຈຳນວນ 13 ຄັ້ງ ຢ່າງເອົາໃຈໃສ່, ຈີນສາມາດແກ້ໄຂຄະດີ “5 ຕຸລາ” ໄດ້ສຳເລັດ, ສອງຝ່າຍໄດ້ຮ່ວມມືກັນລາດຕະເວນຮ່ວມ, ການສອບສວນ, ແລກປ່ຽນລາຍງານສະພາບການ, ການເຝິກອົບຮົມ, ການຮັບມືຮ່ວມກັນ ແລະ ການແກ້ໄຂເຫດການສຸກເສີນ ເຫຼົ່ານີ້ເປັນຕົ້ນ ກໍລ້ວນແຕ່ໄດ້ຮັບໝາກຜົນຢ່າງຫຼວງຫຼາຍ, ສອງຝ່າຍ ລາວ ແລະ ຈີນ ໄດ້ຮ່ວມກັນແກ້ໄຂຄະດີ “19 ມີນາ”, ປົກປ້ອງຄວາມໝັ້ນຄົງຕາມລຳແມ່ນ້ຳຂອງ ໄດ້ຢ່າງມີປະສິດທິຜົນ, ກາຍເປັນຮູບແບບໃໝ່ຂອງການຮ່ວມມືກວດກາປະຕິບັດກົດໝາຍຄວາມປອດໄພລະຫວ່າງສອງຊາດລາວ-ຈີນ.

2.8.3. ດ້ານການຮ່ວມມືວຽກງານສະກັດກັ້ນຢາເສບຕິດ, ສອງຝ່າຍໄດ້ມີການປະສານງານຮ່ວມກັນສະກັດກັ້ນຢາເສບຕິດ, ລາຍງານແລກປ່ຽນຂໍ້ມູນຂ່າວສານເຊິ່ງກັນແລະກັນ, ຮ່ວມມືປະຕິບັດກົດໝາຍ, ຮ່ວມກັນກວາດລ້າງຢາເສບຕິດ ແລະ ປະຕິບັດການຮ່ວມມືເພື່ອຕ້ານຢາເສບຕິດ ໄດ້ຮັບຜົນສຳເລັດຢ່າງເປັນຮູບປະທຳ. ນັບແຕ່ປີ 2012 ເປັນຕົ້ນມາ, ໜ່ວຍງານສະກັດກັ້ນຢາເສບຕິດຕາມຊາຍແດນລາວ-ຈີນ ໄດ້ຮ່ວມກັນເປີດກອງປະຊຸມປຶກສາຫາລື ຈຳນວນ 8 ຄັ້ງ, ຮ່ວມກັນປະຕິບັດກົດໝາຍຮ່ວມກັນ 1 ຄັ້ງ, ວຽກງານກວດລ້າງຢາເສບຕິດຮ່ວມກັນ ຈຳນວນ 6 ຄັ້ງ, ໄດ້ຈັບຜູ້ຕ້ອງຫາຄະດີຢາເສບຕິດຈຳນວນ 9 ຄົນ, ຍຶດຢາໄອສ໌ໄດ້ ຈຳນວນ 2,8 ໂຕນ.

2.8.4. ການສ້າງເງື່ອນໄຂອຳນວຍຄວາມສະດວກໃນການຜ່ານດ່ານ, ໃນວັນທີ 20 ພະຈິກ 2012, ໄດ້ເປີດກອງປະຊຸມ ວ່າດ້ວຍການສ້າງຕັ້ງ “ກົນໄກປະສານງານດ່ານພາສີ ເສັ້ນທາງເດີນເຮືອລຽບຕາມລຳນ້ຳຂອງ-ແມ່ນ້ຳລ້ານຊ້າງ ແລະ ເສັ້ນທາງບົກຄຸນໝິງ-ບາງກອກ ລະຫວ່າງ ລາວ-ຈີນ-ໄທ” ທີ່ເມືອງຄຸນໝິງ ເຊິ່ງແມ່ນອົງການ ໃຫຍ່ພາສີ ສປ ຈີນ ເປັນເຈົ້າພາບ ແລະ ພາສີຄຸນໝິງ ຮັບຈັດກອງປະຊຸມ. ຄະນະຜູ້ແທນດ່ານພາສີທັງ 3 ຝ່າຍ ຮ່ວມປຶກສາຫາລືແລກປ່ຽນກ່ຽວກັບການຊຸກຍູ້ສົ່ງເສີມຄວາມປອດໄພ ແລະ ອຳນວຍຄວາມສະດວກດ້ານການຄ້າ ແລະ ຊຸກຍູ້ການປະຕິບັດ “ສົນທິສັນຍາວ່າດ້ວຍການເອື້ອອຳນວຍຄວາມສະດວກໃນການຂົນສົ່ງສິນຄ້າ ແລະ ການເຂົ້າອອກເມືອງ ໃນ GMS” ແລະ ອື່ນໆ ພ້ອມທັງເຊັນບົດບັນທຶກກອງປະຊຸມ, ເຫັນດີສ້າງກົນໄກປະສານງານດ່ານພາສີ 3 ຝ່າຍ ລາວ-ຈີນ-ໄທ ໂດຍແຕ່ລະຝ່າຍໄດ້ສ້າງຕັ້ງ ຈຸດປະສານງານ ຂອງໃຜລາວ, 3 ຝ່າຍໄດ້ປຶກສາຫາລືຮ່ວມກັນ ໂດຍອີງຕາມຄວາມຕ້ອງການຂອງຕົນ ໃນນັ້ນ ທັງ 3 ຝ່າຍຍັງໄດ້ຮ່ວມກັນແລກປ່ຽນ ກົດໝາຍນິຕິກຳ ແລະ ເອກະສານ ວຽກງານດ້ານພາສີ, ຮ່ວມແລກປ່ຽນຂໍ້ມູນຂ່າວສານ ແລະ ກິດຈະກຳຕ່າງໆ ຕະຫຼອດຮອດວຽກງານຮ່ວມມືດ້ານອື່ນໆ.

ພາສີນະຄອນຄຸນໝິງໄດ້ປະຕິບັດການປະຕິຮູບ ໂດຍແບ່ງເປັນປະເພດການນຳເຂົ້າ-ສົ່ງອອກສິນຄ້າຢູ່ດ່ານຊາຍແດນບໍ່ຫານ, ເຊິ່ງໄດ້ຍົກລະດັບປະສິດທິພາບການນຳເຂົ້າ-ສົ່ງອອກສິນຄ້າ. ດ່ານບໍ່ຫານເລີ່ມການນຳໃຊ້ການຄຸ້ມຄອງການເຂົ້າ-ອອກ ຂອງພາຫະນະ ດ້ວຍລະບົບບັດ IC Card, ເຊິ່ງເຮັດໃຫ້ການແຈ້ງເອກະສານ ແລະ ປ່ອຍພາຫະນະ ເຂົ້າອອກເປັນລະບົບດຽວ ສ້າງເງື່ອນໄຂສະດວກການເຂົ້າອອກຂອງພາຫະນະໃຫ້ມີປະສິດທິຜົນຍິ່ງຂຶ້ນ.

ສອງຝ່າຍໃຫ້ຄວາມສຳຄັນຕໍ່ວຽກງານກໍ່ສ້າງດ່ານລານຕຸຍ-ເມືອງຄັງ, ປະຈຸບັນເງື່ອນໄຂຕ່າງໆດ້ານພື້ນຖານໂຄງລ່າງຂອງທັງສອງຝ່າຍກໍ່ກຽມພ້ອມແລ້ວ.

2.8.5. ນັບແຕ່ປີ 2011 ເປັນຕົ້ນມາ, ກອງບັນຊາການໃຫຍ່ຮັກສາຄວາມສະຫງົບຕາມຊາຍແດນແຂວງຢຸນນານ ໄດ້ຈັດເຝິກອົບຮົມໃນວຽກງານການກວດກາຕາມເຂດແດນໃຫ້ແກ່ພະນັກງານແຂວງພາກເໜືອລາວ ທັງໝົດ 4 ຊຸດ, ລວມຈຳນວນ 120 ເທື່ອຄົນ.

2.8.6. ອົງການສຸຂະອະນາໄມການກວດເຂົ້າອອກເມືອງແຂວງຢຸນນານ ໄດ້ເພີ່ມທະວີການແລກປ່ຽນ ແລະ ຮ່ວມມື ກັບ ພາກສ່ວນສາທາ ແລະ ກະສິກຳ - ປ່າໄມ້ ແຂວງຫຼວງນ້ຳທາ, ຮ່ວມກັນກວດກາພະຍາດຕິດຕໍ່ ແລະ ການກວດກາກັກກັນພະຍາດພືດ ແລະ ສັດ, ມາຮອດປະຈຸບັນ ໄດ້ສ້າງຈຸດຕາໜ່າງກວດກາພະຍາດຂຶ້ນ ຈຳນວນ 105 ຈຸດ ຢູ່ໃນຂົງເຂດ 30 ກິໂລແມັດສອງຟາກຂອງຊາຍແດນຂອງແຕ່ລະປະເທດ. ປີ 2013 ໄດ້ຮ່ວມກັບພະແນກສາທາແຂວງຫຼວງນ້ຳທາ ຈັດກອງປະຊຸມວຽກງານກວດກາສາທາລະນະສຸກຕາມຊາຍແດນ ພ້ອມທັງສ້າງຕັ້ງ "ກົນໄກວຽກງານຮ່ວມມື ແລະ ແລກປ່ຽນ ການກວດກາສາທາລະນະສຸກບໍລິເວນດ່ານຊາຍແດນລາວ-ຈີນ", ເປີດກວ້າງການຮ່ວມມືແກ້ໄຂວຽກງານສຸກເສີນດ້ານສາທາລະນະສຸກ ແລະ ດ້ານການແລກປ່ຽນຂໍ້ມູນຂ່າວສານກ່ຽວກັບພະຍາດທີ່ຮ້າຍແຮງ. ຮ່ວມມືຈັດເຝິກອົບຮົມ ແລະ ແລກປ່ຽນດ້ານເຕັກນິກກັບຝ່າຍລາວ, ປີ 2011, ໄດ້ຈັດຊຸດສຳມະນາ ແລະ ແລກປ່ຽນດ້ານເຕັກນິກປ້ອງກັນເສັ້ນເຂດຊາຍແດນລາວ-ຈີນ '3+1' ແລະ ເຕັກນິກ ການກວດກາກັກກັນພະຍາດພືດ ທີ່ເມືອງຫຼ້າ, ມີນັກສຳມະນາກອນຂອງລາວທີ່ຊຳນານງານຈຳນວນ 13 ທ່ານ ເຂົ້າຮ່ວມເຝິກອົບຮົມໃນຄັ້ງນີ້; ສູນປ້ອງກັນ ແລະ ຄວບຄຸມພະຍາດເມືອງຫຼ້າ ໄດ້ຈັດຊຸດສຳມະນາ ຄວາມເຂົ້າໃຈເຊື້ອພະຍາດເອດ ຕາມເຂດຊາຍແດນ ລາວ-ຈີນ ທີ່ບໍ່ຫານ; ປີ 2012 ພະແນກສາທາແຂວງຫຼວງນ້ຳທາ ແລະພະແນກສາທາແຂວງຢຸນນານ ໄດ້ຮ່ວມກັນຈັດຊຸດເຝິກອົບຮົມວິທີການສົ່ງເສີມໃຫ້ກວດ ແລະ ສອບຖາມພະຍາດເອດໂດຍສະໝັກໃຈ.

ສົ່ງເສີມຜະລິດຕະພັນກະສິກຳລາວເຂົ້າໄປຈີນ, ຕັ້ງໜ້າຊຸກຍູ້ "ຂໍ້ຕົກລົງກ່ຽວກັບຄວາມຕ້ອງການໃນການກັກກັນພະຍາດພືດສຳລັບສາລີທີ່ຈະສົ່ງອອກໄປຈີນ" ຂອງສອງຝ່າຍລາວຈີນໃຫ້ປະກົດຜົນເປັນຈິງ. ໃນວັນທີ 26 ກັນຍາ 2013 ສອງຝ່າຍໄດ້ຮ່ວມລົງນາມໃນຂໍ້ກຳນົດເງື່ອນໄຂດ້ານສຸຂະນາໄມພືດກະສິກຳເຊັ່ນ: ໝາກກ້ວຍ, ໝາກໂມ, ມັນຕົ້ນແຫ້ງ. ຂອງລາວທີ່ຈະສົ່ງເຂົ້າໄປຈີນ, ເຊິ່ງໄດ້ເພີ່ມປະເພດຜະລິດຕະພັນກະສິກຳຂອງລາວໄປຈີນ ໃຫ້ຫຼາຍຂຶ້ນ.

2.9. ການກໍ່ສ້າງເຂດຮ່ວມມືເສດຖະກິດແຂດຊາຍແດນລາວ-ຈີນ ບໍ່ຫານ-ບໍ່ເຕັນມີຄວາມຄືບໜ້າຢ່າງໝັ້ນທ່ຽງ. ໃນເດືອນສິງຫາ ປີ 2013 ແຂວງຢຸນນານໄດ້ອອກນະໂຍບາຍຫຼາຍສະບັບກ່ຽວກັບການສະໜັບສະໜູນການກໍ່ສ້າງເຂດເສດຖະກິດຂ້າມແດນບໍ່ຫານກິ່ງແຂວງສິບສອງພັນນາ. ແຜນການ ກໍ່ສ້າງເຂດເສດຖະກິດດັ່ງກ່າວກໍ່ໄດ້ຮຽບຮຽງສຳເລັດແລ້ວ ແລະ ຢູ່ໃນຂັ້ນຕອນການກວດກາປະເມີນ. ຄະນະສະເພາະກິດການກໍ່ສ້າງເຂດເສດຖະກິດດັ່ງກ່າວໄດ້ຢ້ຽມຢາມ ສປປ ລາວ ໃນເດືອນສິງຫາ ປີ 2013 ແລະ ໄດ້ຮ່ວມເປີກສານຳຄະນະກຳມະການເສດຖະກິດພິເສດ, ເສດຖະກິດສະເພາະຂອງລາວ ພ້ອມທັງບັນລຸການຮັບຮູ້ຮ່ວມກັນກ່ຽວກັບການຮ່ວມກັນຊຸກຍູ້ການກໍ່ສ້າງເຂດເສດຖະກິດດັ່ງກ່າວ, ໄດ້ເຊັນ "ບົດບັນທຶກກອງປະຊຸມ"ຮຽບຮ້ອຍແລ້ວ.

## 2.10. ການຮ່ວມມືນອກຈາກຂອບການຮ່ວມມື ລະຫວ່າງ ບັນດາແຂວງພາກເໜືອລາວ ກັບ ແຂວງ ຢຸນນານ.

ໃນຊຸມປີຜ່ານມາ, ແຂວງຢຸນນານ ນອກຈາກໄດ້ມີການຮ່ວມມື ກັບພາກເໜືອລາວ, ຍັງຕັ້ງໜ້າເພີ່ມທະວີການຮ່ວມມື ກັບ ບັນດາພາກສ່ວນທີ່ກ່ຽວຂ້ອງ ແລະ ບັນດາແຂວງພາກກາງ, ພາກໃຕ້ ຂອງ ສປປ ລາວ, ສອງຝ່າຍໄດ້ຕີລາຄ່າສູງ ຕໍ່ກັບຄວາມເອົາໃຈໃສ່ຢ່າງຕັ້ງໜ້າຂອງແຂວງຢຸນນານ, ລັດຖະບານ ສປປ ລາວ ກໍ່ຍິນດີຕ້ອນຮັບ ແຂວງຢຸນນານ ມາຮ່ວມມືກັບແຂວງອື່ນໆ ຂອງ ສປປ ລາວ ໃນຂົງເຂດວຽກງານທີ່ສອງຝ່າຍມີທ່າແຮງ, ເຊິ່ງມີບາງວຽກງານໄດ້ຮັບຜົນສຳເລັດພົ້ນເດັ່ນດັ່ງນີ້:

2.10.1. ບໍລິສັດ ລົງທຶນຕ່າງປະເທດຢຸນນານ ກັບ ກຸ່ມບໍລິສັດກູີດຕະພົງລາວ ໄດ້ອອກທຶນຈຳນວນ 12.000.000 ໂດລາ ສຫລ ສ້າງຕັ້ງບໍລິສັດ ພັດທະນາກວມລວມໜອງຈັນຕອນເໜືອຈຳກັດ ເພື່ອກໍ່ສ້າງໂຄງການສູນກາງທ່ອງທ່ຽວ ແລະ ທຸລະກິດສາກົນວຽງຈັນ, ໂຄງການໄດ້ເລີ່ມກໍ່ສ້າງແຕ່ເດືອນພະຈິກ 2012, ກວມເອົາເນື້ອທີປະມານ 80 ມູ, ເຂດພື້ນທີ່ກໍ່ສ້າງປະມານ 120.000 ຕາແມັດ, ການລົງທຶນທັງໝົດ 115.000.000 ໂດລາ ສຫລ.

2.10.2. ອຳນາດການປົກຄອງນະຄອນຫຼວງວຽງຈັນ ແລະ ບໍລິສັດລົງທຶນຕ່າງປະເທດຢຸນນານ ໄດ້ອອກທຶນຈຳນວນ 128.000.000 ໂດລາ ສຫລ ເພື່ອຮ່ວມມືປະຕິບັດໂຄງການພັດທະນາກວມລວມເມືອງໄຊເສດຖາ ນະຄອນຫຼວງວຽງຈັນ, ວຽກງານກະກຽມເບື້ອງຕົ້ນມີຄວາມສະດວກດີ.

2.10.3. ບໍລິສັດລົງທຶນພະລັງງານໄຟຟ້າຢຸນນານຈຳກັດ ໄດ້ລົງທຶນປະມານ 360 ລ້ານ ຢວນ ເພື່ອປະຕິບັດໂຄງການສາຍສົ່ງໄຟຟ້າ ແຕ່ເມືອງເຊໂປນ ຫາ ແຂວງສາລະວັນ, ລວມມີການປັບປຸງ-ຂະຫຍາຍສະຖານີໄຟຟ້າ 5 ແຫ່ງ, ສາຍສົ່ງໄຟຟ້າທີ່ມີຄວາມຍາວ 240 ກິໂລແມັດ, ເຊິ່ງໃນ ປີ 2013 ໄດ້ສຳເລັດບົດວິພາກຄວາມເປັນໄປໄດ້ຂອງໂຄງການ, ສູ້ຊົນໃຫ້ໄດ້ເຊັນສັນຍາຮັບເໝົາລວມ ພາຍໃນທ້າຍປີ 2013 ນີ້.

2.10.4. ກຸ່ມບໍລິສັດລົງທຶນດ້ານພະລັງງານຢຸນນານໄດ້ເຊັນສັນຍາໃນວັນທີ 30/03/2012 ກັບລັດຖະບານ ສປປ ລາວ ວ່າດ້ວຍການຂຸດຄົ້ນ ແລະ ສຳຫຼວດ ແຫຼ່ງວັດຖຸດິບເພື່ອແນໃສ່ສ້າງຕັ້ງໂຮງງານຜະລິດຊີມັງ ຂະໜາດ 1.000.000 ໂຕນ/ປີ, ປະຈຸບັນກຳລັງຢູ່ໃນໄລຍະການສຶກສາຄວາມເປັນໄປໄດ້ທາງດ້ານເສດຖະກິດ-ເຕັກນິກເບື້ອງຕົ້ນ. ໂຮງງານດັ່ງກ່າວຄາດວ່າ ຈະມີມູນຄ່າການລົງທຶນທັງໝົດປະມານ 95.830.000 ໂດລາ ສຫລ ແລະ ຄາດວ່າ ຫຼັງຈາກໄດ້ເລີ່ມດຳເນີນການກໍ່ສ້າງໂຮງງານ ປີ 2015 ຈະສຳເລັດ ແລະ ສາມາດຜະລິດຢ່າງເປັນທາງການ.

2.10.5. ເດືອນ ພຶດສະພາ 2013 ປີ, ສອງຝ່າຍເຫັນດີເປັນເອກະພາບກັນ ກ່ຽວກັບ ການເປີດ ເສັ້ນທາງຂົນສົ່ງສາຍຄຸນມີງ-ຈຳປາສັກ. ປະຈຸບັນ ກຳລັງລໍຖ້າຂັ້ນເທິງພິຈາລະນາ.

2.10.6. ໃນໂຄງການກໍ່ສ້າງພື້ນຖານໂຄງລ່າງເຂດເສດຖະກິດພູແກ້ວ ແຂວງຄຳມ່ວນທີ່ບໍລິສັດ ຂົວທາງຢຸນນານຮັບເໝົາກໍ່ສ້າງເປັນຕົ້ນແມ່ນ ເຂດເສດຖະກິດ ທ່າເດື່ນຍີນ ແຂວງຄຳມ່ວນ, ປະຈຸບັນວຽກງານເບື້ອງຕົ້ນດຳເນີນໄປຢ່າງສະດວກດີ.

## III. ທິດທາງແຜນການຮ່ວມມືຂອງສອງຝ່າຍທີ່ສຳຄັນໃນຕໍ່ໜ້າ

### 3.1 ການຮ່ວມມືດ້ານການຄ້າ, ການເງິນ ແລະ ການທະນາຄານ.

3.1.1. ຢູ່ໃນຂອບການກໍ່ສ້າງເຂດການຄ້າເສລີຈີນ-ອາຊຽນ ພ້ອມກັນຕັ້ງໜ້າຮັກສາທ່າອ່ຽງການຂະຫຍາຍຕົວຢ່າງໄວຂອງການຄ້ານຳເຂົ້າ-ສົ່ງອອກ ລາວ ແລະ ຢູນນານ, ຝ່າຍຢູນນານຈະຕັ້ງໜ້າສ້າງເງື່ອນໄຂການນຳເຂົ້າສິນຄ້າຂອງລາວໃຫ້ສະດວກຂຶ້ນ.

3.1.2. ສອງຝ່າຍສົ່ງເສີມການຮ່ວມມືຂອງສະຖາບັນການເງິນ ເພື່ອຂະຫຍາຍການລະດົມທຶນດ້ານການຄ້າ ແລະ ສັນຍາຊື້ຂາຍເງິນຕາຕ່າງປະເທດ, ຂະຫຍາຍການຊຳລະເງິນຂ້າມແດນ ລະຫວ່າງ ສອງປະເທດ ລາວ-ຈີນ. ຝ່າຍຢູນນານຈະເອົາໃຈໃສ່ຊຸກຍູ້ໃຫ້ທະນາຄານພັດທະນາແຫ່ງຊາດຈີນ ສາຂາແຂວງຢູນນານ ຮ່ວມກັບຝ່າຍລາວ ໃນການຈັດຕັ້ງປະຕິບັດ "ໂຄງການນຳໃຊ້ບັດ ATM ຮ່ວມກັນ ລະຫວ່າງທະນາຄານ ຂອງ ສປປ ລາວ Laos ATM Pool Switch" , ຊຸກຍູ້ທະນາຄານຟູຕ່ຽນໃນການຮ່ວມທຶນກັບທະນາຄານການຄ້າຕ່າງປະເທດລາວມະຫາຊົນ ເພື່ອສ້າງຕັ້ງທະນາຄານຮ່ວມທຸລະກິດ ລາວ-ຈີນ ຂຶ້ນໃນ ສປປ ລາວ.

3.1.3. ສອງຝ່າຍເຫັນດີຄົ້ນຄ້ວາ ເພື່ອເຮັດໃຫ້ ກອງປະຊຸມ ກຸ່ມຮ່ວມມືດ້ານ ການຄ້າ, ການເງິນ ແລະທະນາຄານ ຂອງຄະນະປະສານງານພາກເໜືອລາວ ກັບ ແຂວງຢູນນານ ທັນເປັນກົນໄກ, ເພື່ອແກ້ໄຂບັນຫາຕ່າງໆ ທີ່ເກີດຈາກການຮ່ວມມືດ້ານການຄ້າ-ການລົງທຶນ ໃຫ້ທັນການ. ສອງຝ່າຍ ສະໜັບສະໜູນໃຫ້ມີການເປີດກອງປະຊຸມ ຄັ້ງທີ 2 ກຸ່ມຮ່ວມມື ດ້ານການຄ້າ, ການເງິນ ແລະ ທະນາຄານ.

3.1.4. ແຂວງຢູນນານ ຍິນດີຊ່ວຍເຫຼືອປະສານສົມທົບ ກັບພາກສ່ວນທີ່ກ່ຽວຂ້ອງຂອງຝ່າຍລາວ ໃນການປະເມີນຄຸນວຸທິ, ຄວາມສາມາດດ້ານເສດຖະກິດ ແລະ ຄວາມໜ້າເຊື່ອຖື ຂອງບໍລິສັດແຂວງຢູນນານ ທີ່ໄປລົງທຶນຢູ່ ສປປ ລາວ, ແນະນຳໃຫ້ບໍລິສັດທີ່ມີຄວາມສາມາດເຂົ້າມາລົງທຶນ ຢູ່ ສປປ ລາວ.

### 3.2 ການຮ່ວມມືດ້ານກະສິກຳ, ປ່າໄມ້ ແລະ ປູກພືດທົດແທນການປູກຝິ່ນ.

3.2.1. ສືບຕໍ່ຂະຫຍາຍການຮ່ວມມືໃນຂົງເຂດກະສິກຳ, ເຮັດໃຫ້ບົດບາດ ແລະ ປະສິດທິພາບຂອງ ສວນສາທິດເຕັກນິກວິທະຍາສາດກະສິກຳ ອຸດົມໄຊ-ຢູນນານ ພັດທະນາໄປອີກກ້າວໜຶ່ງ. ເພີ່ມທະວີການເຝິກອົບຮົມດ້ານເຕັກນິກກະສິກຳ, ດ້ານການປ້ອງກັນສັດຕູພືດກະສິກຳ ແລະ ການປ້ອງກັນພະຍາດສັດ ແລະ ສັດປີກ. ຍົກລະດັບເຕັກນິກພົນການຜະລິດກະສິກຳລາວໃຫ້ສູງຂຶ້ນ, ເພື່ອເພີ່ມລາຍຮັບໃຫ້ແກ່ຊາວກະສິກອນ. ເພີ່ມທະວີການຮ່ວມກັນປ້ອງກັນຄວບຄຸມພະຍາດລະບາດສັດຂ້າມແດນ, ຊຸກຍູ້ການພັດທະນາວຽກງານ ການລ້ຽງສັດຢ່າງເຂັ້ມແຂງ. ປະຕິບັດ "ຂໍ້ກຳນົດເງື່ອນໄຂດ້ານສຸຂະນາໄມກ່ຽວກັບການສົ່ງສາລີ ຂອງລາວ ໄປຍັງຈີນ" ໃຫ້ໄດ້ດີອີກກ້າວໜຶ່ງ, ຊຸກຍູ້ໃຫ້ໄດ້ເຊັນສັນຍາການສົ່ງຜະລິດຕະພັນເຂົ້າສານ ໄປຍັງປະເທດ ຈີນ. ເພີ່ມທະວີການຮ່ວມມື ດ້ານການປົກປັກຮັກສາຊີວະນາໆພັນຕາມຊາຍແດນ, ປ້ອງກັນໄຟໄໝ້ປ່າ, ຮ່ວມກັນປ້ອງກັນສັດຮ້າຍໃນປ່າແລະ ອື່ນໆ. ສອງຝ່າຍເພີ່ມທະວີການຮ່ວມມືໃນດ້ານການປູກໝາກຖາຍ, ໝາກກໍ່ໂກ້ ແລະ ພືດສະໝຸນໄພປ່າ.

3.2.2. ສອງຝ່າຍເພີ່ມທະວີການຮ່ວມມື ການປູກພືດທົດແທນການປູກຝິ່ນ ໄປອີກບາດກ້າວໜຶ່ງ, ຕົ້ນຕໍແມ່ນການຮ່ວມມື ດ້ານການຮ່ວມກັນສ້າງ ແລະ ກຳນົດ ແຜນການຮ່ວມມືປູກພືດທົດແທນ, ປັບປຸງນະໂຍບາຍສະໜັບສະໜູນຂອງສອງຝ່າຍໃຫ້ດີຂຶ້ນ, ຊຸກຍູ້ໂຄງການສາທິດ, ສ້າງກົນໄກຮ່ວມມືຂັ້ນທ້ອງຖິ່ນ, ເປີກສາຫາລືວິທີການແກ້ໄຂ ບັນຫາການນຳໃຊ້ແຮງງານ ແລະ ວຽກງານການຮ່ວມມືອື່ນໆ. ພ້ອມທັງແກ້ໄຂບັນຫາ ຂອງຜະລິດຕະພັນກະສິກຳ ທີ່ຜະລິດຈາກ ໂຄງການປູກພືດທົດແທນ

ການປູກຝັ່ນສິ່ງກັບໄປຂາຍໃຫ້ຈີນຄືນ. ຕິດຕາມຊຸກຍູ້ໃຫ້ບໍລິສັດທີ່ມາລົງທຶນ ຢູ່ລາວ ໄດ້ມີການສ້າງຕັ້ງສຳນັກງານທີ່ຖາວອນ, ກຳນົດຜູ້ຮັບຜິດຊອບ ແລະ ວິທີການຕິດຕໍ່ປະສານງານ.

3.2.3. ຝ່າຍລາວຈະໄດ້ຄົ້ນຄວ້າກັບຝ່າຍຈີນເພື່ອເຊັນຮ່າງຂໍ້ກຳນົດຄວາມສ່ຽງເຂົ້າ. ໃນເວລາດຽວກັນນັ້ນລັດຖະບານລາວ ຍັງບໍ່ທັນໄດ້ ເຮັດໜັງສືປະເມີນສະເໜີ ໄປຫາໃຫ້ອົງການກວດກາຄຸນນະພາບ ແຫ່ງ ສປ ຈີນ ເພື່ອປະເມີນຄວາມສ່ຽງຂອງສັດຕູພືດ ຕໍ່ກັບເຄືອໝາກນ້ຳມັນ, ຜັກ, ຢາສະໝູນໄພ ແລະ ຜົນຜະລິດກະສິກຳປະເພດອື່ນໆ. ຝ່າຍຈີນຈະຮ່ວມມືກັບຝ່າຍລາວຊຸກຍູ້ການກວດກາປະເມີນຄວນສ່ຽງ ວຽກງານກັກກັນພືດແລະວຽກງານກ່ຽວກັບເຊັນຂໍ້ກຳນົດ, ເພື່ອແກ້ໄຂບັນຫາດ້ານເຕັກນິກໃນ ການສົ່ງສິນຄ້າກະສິກຳອອກໄປຈີນ.

3.2.4. ສອງຝ່າຍສືບຕໍ່ຊຸກຍູ້ບັນດາບໍລິສັດ ໃຫ້ອີງຕາມແຜນການໃນການເກັບຊື້ຢາງພາລາ ແລະ ເຄືອໝາກນ້ຳມັນ, ສົ່ງເສີມໃຫ້ບໍລິສັດຈີນ ເຂົ້າມາຮ່ວມມືຂະແໜງການປູກຝັງ, ລ້ຽງສັດ ແລະ ການປະມົງ. ສືບຕໍ່ຈັດຕັ້ງປະຕິບັດ ສັນຍາວ່າດ້ວຍການຮ່ວມມືປູກເຄືອໝາກນ້ຳມັນ ລະຫວ່າງ ກະຊວງກະສິກຳ-ປ່າໄມ້ລາວ ແລະ ອຳນາດການປົກຄອງກິ່ງແຂວງສິບສອງພັນນາ ໄດ້ລົງນາມຮ່ວມກັນ.

3.2.5. ສອງຝ່າຍຊຸກຍູ້ການຈັດຕັ້ງປະຕິບັດ ສັນຍາສາທິດທົດລອງ ການປູກເຄືອໝາກນ້ຳມັນ ຢູ່ສູນສາທິດການບໍລິການ ເຕັກນິກກະສິກຳຮ່ວມມືລາວ-ຈີນ(ຢູ່ແຂວງອຸດົມໄຊ) ລະຫວ່າງ ຢູ່ສູນສາທິດ ການບໍລິການ ເຕັກນິກກະສິກຳຮ່ວມມືລາວ-ຈີນ(ຢູ່ແຂວງອຸດົມໄຊ) ແລະ ບໍລິສັດ ພູເອີ ລຽນຈິງ ຊັບພະຍາກອນຊີວະພັດທະນາ ຈຳກັດ.

## 3.3 ການຮ່ວມມືດ້ານການລົງທຶນ, ດ້ານພະລັງງານ, ບໍ່ແຮ່ ແລະ ແຮ່ທາດ

3.3.1. ຮ່ວມກັນຄົ້ນຄ້ວາເພື່ອເພີ່ມທະວີການຮ່ວມມື ດ້ານການພັດທະນາພະລັງງານໄຟຟ້ານ້ຳຕົກ ຂະໜາດນ້ອຍ ແລະ ຂະໜາດກາງ ລະຫວ່າງພາກເໜືອລາວ ກັບ ແຂວງຢູນນານ, ເພື່ອຫັນເອົາທ່າແຮງຊັບພະຍາກອນພະລັງງານໄຟຟ້ານ້ຳຕົກ ເປັນທ່າແຮງດ້ານເສດຖະກິດສອງຝ່າຍຄົ້ນຄ້ວາສົ່ງເສີມ ການປູກໝາກເຢົາ, ມັນຕົ້ນ ແລະ ພືດພະລັງງານທົດແທນອື່ນໆ, ຊຸກຍູ້ໂຄງການ ປູກພືດພະລັງງານທົດແທນ ຢູ່ແຂວງອຸດົມໄຊ ແລະ ແຂວງອື່ນໆ. ເພີ່ມທະວີການແລກປ່ຽນ ດ້ານພະລັງງານ. ແຂວງຢູນນານ ໄດ້ມີແຜນຈັດຊຸດເຝິກອົບຮົມດ້ານການພັດທະນາ ແລະ ນຳໃຊ້ເຕັກນິກ ວິທະຍາສາດພະລັງງານທົດແທນ ໃຫ້ແກ່ ພະນັກງານພາກລັດ, ອົງການຄົ້ນຄວ້າ ແລະ ວິສາຫະກິດໃນຂະແໜງພະລັງງານ ຂອງພາກເໜືອລາວ.

3.3.2. ສອງຝ່າຍພ້ອມກັນເລັ່ງລັດການຄົ້ນຄວ້າ ບັນຫາ ທີ່ຕິດພັນກັບ ການຍົກລະດັບຄຸນນະພາບໃນການເຊື່ອມຕໍ່ ຕາຂ່າຍໄຟຟ້າ ລະຫວ່າງ ແຂວງຢູນນານ ກັບພາກເໜືອລາວ ແລະ ເພີ່ມຂະຫຍາຍການຊື້-ຂາຍໄຟຟ້າ. ຝ່າຍຈີນເຫັນດີຊຸກຍູ້ ທະນາຄານ CDB ສາຂາຢູນນານ ຮີບຮ້ອນສົ່ງຮ່າງສັນຍາເງິນກູ້ສຳລັບ ໂຄງການ ຕາຂ່າຍ ໄຟຟ້າພາກເໜືອລາວ 230 Kv, ຫຼວງພະບາງ ຫາ ຊາຍແດນລາວ-ຈີນ ແລະ ໂຄງການຕິດຕັ້ງສະຖານີ 4 ແຫ່ງ. ຊຸກຍູ້ໃຫ້ບໍລິສັດຕາຂ່າຍໄຟຟ້າຢູນນານ ຄົ້ນຄວ້າເຂື່ອນໄຟຟ້າເຂດພາກເໜືອໂດຍສະເພາະແມ່ນ ບັນຫາການຊື້-ຂາຍ ໄຟຟ້າຂອງໂຄງການເຂື່ອນໄຟຟ້ານ້ຳອູ.

3.3.3. ສອງຝ່າຍພ້ອມກັນສະໜັບສະໜູນ ບໍລິສັດທີ່ມີຄວາມສາມາດຂອງແຕ່ລະຝ່າຍໄປລົງທຶນຢູ່ ສອງປະເທດລາວ-ຈີນ. ເພີ່ມຄວາມສະດວກໃນການບໍລິການດ້ານຕ່າງໆເຊັ່ນ: ສອບຖາມຂໍ້ມູນທາງດ້ານນະໂຍບາຍ, ຂັ້ນຕອນການອະນຸມັດໂຄງການ, ການນຳໃຊ້ແຮງງານ, ການລະດົມທຶນ, ປະກັນໄພ ແລະ ຄວາມປອດໄພດ້ານຊີວິດຊັບສິນ. ຝ່າຍລາວເຫັນດີອຳນວຍຄວາມສະດວກ ໃນຂັ້ນຕອນການສະເໜີເອກະສານໃນໄລຍະການປະຕິບັດໂຄງການແລະ ການສະເໜີເພີ່ມສິດສຳປະທານ ໃຫ້ແກ່ບໍລິສັດຂອງແຂວງຢູນນານທີ່ໄດ້ຮັບສິດສຳປະທານດ້ານແຮ່ທາດ ແລະ ບໍ່ແຮ່ຢູ່ລາວ. ຝ່າຍຈີນຍິນ

ດີສະໜັບສະໜູນກວດກາ ບໍລິສັດທີ່ໄດ້ຮັບສິດສໍາປະທານ ໃນການສໍາຫຼວດ ແລະ ຂຸດຄົ້ນບໍ່ແຮ່ໃຫ້ປະຕິບັດຕາມຕາມສັນຍາຢ່າງເຄັ່ງຄັດ.

## 3.4 ການຮ່ວມມືດ້ານການທ່ອງທ່ຽວ ແລະ ວັດທະນະທໍາ

3.4.1. ເພີ່ມທະວີການແລກປ່ຽນຮ່ວມມືດ້ານການ ພັດທະນາວາງແຜນການທ່ອງທ່ຽວ, ບຸກເບີກພັດທະນາເສັ້ນທາງທ່ອງທ່ຽວ, ຊ່ວຍເຫຼືອແກ້ໄຂຄໍາຮ້ອງທຸກ ດ້ານການທ່ອງທ່ຽວ, ສ້າງຄວາມສະດວກໃນການແຈ້ງໜັງສືຜ່ານແດນ, ອໍານວຍຄວາມສະດວກດ້ານເສັ້ນທາງທ່ອງທ່ຽວ ແລະ ອື່ນໆ. ເພີ່ມທະວີສົ່ງເສີມການໂຄສະນາເຜີຍແຜ່ຮ່ວມກັນ, ພ້ອມກັນສ້າງຈຸດເປົ້າໝາຍສະຖານທີ່ທ່ອງທ່ຽວທີ່ເປັນເອກະລັກ; ເປີດກວ້າງການຮ່ວມມືດ້ານການໂຄສະນາເປົ້າໝາຍແຫຼ່ງທ່ອງທ່ຽວ, ສ້າງຕັ້ງສູນຂໍ້ມູນຂ່າວສານການທ່ອງທ່ຽວ ແລະ ການຮ່ວມມືອື່ນໆ.

3.4.2. ຮ່ວມກັນສ້າງຕັ້ງເສັ້ນທາງທອງທ່ຽວຄໍາ 4 ປະເທດ ລາວ-ຈີນ-ມຽນມາ-ໄທ "ຊຽງຮຸ່ງ-ບໍ່ແກ້ວ-ຊຽງລາຍ-ທ່າຂີ້ເຫຼັກ-ຕາລີວ" ທັງສອງຝ່າຍ ລະດົມໃຫ້ມີການຈັດຕັ້ງເປັນສະມາຄົມ ເພື່ອເຮັດໃຫ້ວຽກງານການທ່ອງທ່ຽວມີຄວາມ ສະດວກໃນການປະສານງານທັງພາກລັດ ແລະ ເອກະຊົນ. ຊຸກຍູ້ການຮ່ວມມືສໍາຫຼວດ ແລະ ສຶກສາຄວາມເປັນໄປໄດ້ໃນການສ້າງວົງຈອນການທ່ອງທ່ຽວເຊື່ອມຕໍ່ "ເມືອງຈຽງເສີງ ນະຄອນພູເອີ້-ແຂວງ ຜົ້ງສາລີ (ດ່ານເມືອງຄໍາ)-ອຸດົມໄຊ-ຫຼວງນໍ້າທາ (ດ່ານສາກົນບໍ່ເຕນ)-ສິບສອງພັນນາ-ນະຄອນພູເອີ້".

3.4.3. ຝ່າຍລາວສະໜັບສະໜູນ ໃຫ້ບໍລິສັດຈາກແຂວງຢຸນນານ ເຂົ້າໄປລົງທຶນສ້າງໂຮງແຮມທີ່ມີລະດັບຢູ່ເມືອງບຸນເໜືອແຂວງຜົ້ງສາລີ; ຊ່ວຍເຫຼືອປະຊາຊົນທ້ອງຖິ່ນໃນການບຸກເບີກພັດທະນາຜະລິດຕະພັນຊາ ຈາກຕົ້ນຊາທີ່ມີອາຍຸ 400 ປີ, ພ້ອມທັງການເຝິກອົບຮົມສິນລະປະການດື່ມຊາ,ເພື່ອຍົກລະດັບການບໍລິການ ດ້ານຂະແໜງການທ່ອງທ່ຽວຂອງທ້ອງຖິ່ນ.

## 3.5 ກຸ່ມຮ່ວມມືດ້ານໂຍທາທິການ, ຂົນສົ່ງ, ໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ.

3.5.1. ສືບຕໍ່ຮັກສາ ແລະ ພັດທະນາບັນຍາກາດຂອງການຮ່ວມມືສອງຝ່າຍ ດ້ານການຄົມມະນາຄົມໃຫ້ໄດ້ດີ, ເອົາໃຈໃສ່ຊຸກຍູ້ປະຕິບັດສັນຍາ ວ່າດ້ວຍການອໍານວຍຄວາມສະດວກໃນການຂົນສົ່ງໂດຍສານອະນຸພາກພື້ນແມ່ນໍ້າຂອງ, ເພື່ອອໍານວຍຄວາມສະດວກໃຫ້ແກ່ການໂດຍສານ, ພາຫະນະຄົມມະນາຄົມ ແລະ ຂົນສົ່ງສິນຄ້າຂ້າມຊາດໃນຂົງເຂດອະນຸພາກພື້ນແມ່ນໍ້າຂອງ.

3.5.2. ສອງຝ່າຍເຫັນດີຈະຕິດຕາມ ແລະ ຊຸກຍູ້ໃຫ້ ບັນດາເຮືອຂົນສົ່ງ ທີ່ດໍາເນີນກິດຈະການ ຢູ່ຕາມລໍາແມ່ນໍ້າຂອງ ໃຫ້ຢຸດຈອດຕາມທ່າເຮືອ(ດ່ານທ່າເຮືອ) ທີ່ກໍານົດໄວ້ໃນລະບຽບການເດີນເຮືອ 4 ປະເທດ ລາວ, ຈີນ, ໄທ ແລະ ມຽນມາ, ເພື່ອຮັບການກວດກາ ຕາມລະບຽບການທີ່ກ່ຽວຂ້ອງ.

3.5.3. ສອງຝ່າຍຮ່ວມກັນ ຕິດຕາມການແລ່ນລົດໂດຍສານຕ່າງປະເທດແຕ່ ຜົ້ງສາລີ-ເມືອງລ້າ, ອຸໃຕ້-ເມືອງຈຽງເສີງ ແລະ ເມືອງບຸນໃຕ້-ເມືອງລ້າ ໃຫ້ເປັນປົກກະຕິ. ສືບຕໍ່ຈັດຕັ້ງປະຕິບັດ ການສະເໜີໃຫ້ເປີດການຂົນສົ່ງໂດຍສານຕ່າງປະເທດ ແຕ່ເມືອງຂວາ-ເມືອງລ້າ. ສຶກສາຄົ້ນຄວ້າ ເພື່ອແກ້ໄຂບັນຫາດ້ານເຕັກນິກ ແລະ ນະໂຍບາຍ ເຮັດໃຫ້ລົດສ່ວນຕົວຂະໜາດນ້ອຍ ແລະ ລົດບັນທຸກຂອງລາວ ສາມາດເຂົ້າໄປແລ່ນພາຍໃນ ແຂວງຢຸນນານໄດ້.

3.5.4. ຊຸກຍູ້ການສ້າງຕັ້ງກົນໄກທີ່ມີປະສິດທິພາບ ຂອງໜ່ວຍງານປະຕິບັດງານຮ່ວມ 3 ຝ່າຍ, ລາວ, ຈີນ ແລະ ໄທ ກ່ຽວກັບການສ້າງຄວາມສະດວກໃນການຜ່ານດ່ານຕາມເສັ້ນທາງຄຸນມິງ-ບາງກອກ.ເພີ່ມຈັງຫວະໃນການກໍ່ສ້າງສິ່ງອໍານວຍຄວາມສະດວກ ການບໍລິການລົດຂົນສົ່ງໂດຍສານຕາມເສັ້ນທາງຄຸນຄຸນມິງ-ບາງກອກ, ຍົກສູງລະດັບການບໍລິການ. ປະສານສົມທົບ ໃຫ້ການຮ່ວມມືດ້ານການຂົນສົ່ງຢູ່

ຕາມເສັ້ນທາງ ຄຸນມິງ-ບາງກອກ ໃຫ້ມີການປະຕິບັດ ພັດທະນາ ໄປອີກ ບາດກ້າວໜຶ່ງ, ນຳໃຊ້ທ່າແຮງ ຂອງເສັ້ນທາງສາກົນ ຄຸນມິງ-ບາງກອກ ຢ່າງເຕັມສ່ວນ, ຊຸກຍູ້ການ ຮ່ວມມືດ້ານການຂົນສົ່ງສາກົນ ລະຫວ່າງ ລາວກັບແຂວງຢຸນນານ. ນຳໃຊ້ການຕິດຕໍ່ປະສານງານ ຂອງອົງການຈັດຕັ້ງເອກະຊົນ ເພື່ອ ເຮັດໃຫ້ການຂົນສົ່ງ ຕາມເສັ້ນທາງ ຄຸນມິງ-ບາງກອກ ມີຄວາມ ສະດວກ.

3.5.5. ສອງຝ່າຍຈະປະສານສົມທົບ ລັດຖະບານສອງປະເທດເພື່ອດຳເນີນການເບື້ອງຕົ້ນຂອງໂຄງການກໍ່ສ້າງ ທາງລົດໄຟ, ເອົາໃຈໃສ່ຊຸກຍູ້ໃຫ້ໂຄງການໄດ້ເລີ່ມກໍ່ສ້າງໂດຍໄວ. ເພື່ອເປັນແຮງຊຸກດັນໃໝ່ໃນການ ຮ່ວມມືພາກເໜືອລາວ ກັບ ແຂວງຢຸນນານ.

3.5.6. ສອງຝ່າຍພະຍາຍາມຊຸກຍູ້ໃຫ້ ລັດຖະບານສູນກາງຂອງຕົນ ອະນຸມັດໃຫ້ກໍ່ສ້າງເສັ້ນທາງໃນລະດັບໃດ ໜຶ່ງ ແຕ່ນະຄອນພູເອີ ແຂວງຢຸນນານ, ໂມຈຽງ-ຈຽງເສີງ-ດ່ານເມືອງຄຳ ດ່ານລານຕຸຍ-ເມືອງຍອດອູ ແຂວງ ຜົ້ງສາລີ-ຫຼວງພະບາງ-ວຽງຈັນ, ເພື່ອສ້າງເງື່ອນໄຂສະດວກໃຫ້ແກ່ການຮ່ວມມືສອງຝ່າຍ ກໍ່ຄື ການຮ່ວມມື ຫຼາຍຝ່າຍ ໃຫ້ມີເສັ້ນທາງໃຫຍ່ ແລະ ສະດວກອີກໜຶ່ງເສັ້ນ.

3.5.7. ນຳໃຊ້ທ່າແຮງຂອງລະບົບການສື່ສານ ບໍລິສັດ China Unicom, ບໍລິສັດ China telecom ແລະ ພະແນກພາກພື້ນສາກົນຄຸນມິງທີ່ສ້າງສຳເລັດແລ້ວ, ເພີ່ມທະວີຮ່ວມມືກັນຢ່າງເລິກເຊິ່ງ ແລະ ການ ກໍ່ສ້າງລະບົບສາຍໄຍແກ້ວສາກົນ ກັບ ຫົວໜ່ວຍທຸລະກິດລາວ. ສ້າງກົນໄກການຮ່ວມມື ແລະ ກົນໄກ ການແລກປ່ຽນໃຫ້ໄດ້ດີ, ເພີ່ມຈັງຫວະການພັດທະນາກິດຈະການສື່ສານໃຫ້ໄວຂຶ້ນ. ຝ່າຍລາວສະເໜີ ໃຫ້ ສອງຝ່າຍຊຸກຍູ້ການ ຮ່ວມມື ເຊື່ອມຕໍ່ລະບົບ IR (International Roaming) ລະຫວ່າງ ລັດວິສາຫະກິດລາວໂທລະຄົມ ກັບ ບໍລິສັດ China Mobile. ຊຸກຍູ້ການປະຕິບັດບົດ ບັນທຶກ ຄວາມຊ່ວຍຈຳເພື່ອສ້າງ ລະບົບເຊື່ອມຕໍ່ (Border System) ຢູ່ດ່ານບໍ່ເຕັນ-ບໍ່ຫານ ລະຫວ່າງ ລັດວິສາຫະກິດສະກາຍ ໂທລະຄົມລາວ ແລະ China Telecom.

3.5.8. ສອງຝ່າຍເຫັນດີຈະເພີ່ມທະວີການແລກປ່ຽນບົດຮຽນ ແລະ ການເຝິກອົບຮົມພະນັກງານໃນຂະແໜງ ການໄປສະນີ, ໂທລະຄົມ, ເພີ່ມທະວີການຮ່ວມມືແລກປ່ຽນເມ ຢູ່ດ່ານບໍ່ເຕັນ-ບໍ່ຫານ. ຮ່ວມມືກັນ ປະຕິບັດຕາມເນື້ອໃນຂອງບົດບັນທຶກກອງປະຊຸມຄັ້ງທີ່ 5 ກ່ຽວກັບວຽກງານໄປສະນີ ອີກບາດກ້າວ ໜຶ່ງ.

## 3.6 ກຸ່ມຮ່ວມມືດ້ານການສຶກສາ, ວິທະຍາສາດ-ເຕັກນິກ ແລະ ສາທາລະນະສຸກ.

3.6.1. ສືບຕໍ່ເພີ່ມທະວີການສົນທະນາ ແລະ ປຶກສາຫາລືດ້ານການສຶກສາ ລະຫວ່າງ ລັດຖະບານລາວ ແລະ ແຂວງຢຸນນານ, ຊຸກຍູ້ໃຫ້ມີການແລກປ່ຽນຄະນະຜູ້ແທນຂັ້ນສູງຂອງ ຂະແໜງການສຶກສາ, ຈັດກອງ ປະຊຸມປຶກສາຫາລືດ້ານການສຶກສາ. ເພີ່ມທະວີການຮ່ວມມືດ້ານວິຊາສະເພາະ ແລະຫຼັກສູດການສຶກ ສາ ລະຫວ່າງ ໂຮງຮຽນປະເພດຕ່າງໆ ຂອງສອງຝ່າຍ ລາວ ກັບ ແຂວງຢຸນນານ, ເປີດການຢ້ຽມຢາມ ແລະ ແລກປ່ຽນລະຫວ່າງຄູອາຈານ. ເປີດການຮ່ວມມືດ້ານການຄົ້ນຄວ້າວິທະຍາສາດ, ໂດຍອີງໃສ່ຈຸດ ພິເສດ ແລະຄວາມຕ້ອງການແທ້ຈິງຂອງອາຈານນັກສຶກສາແຕ່ລະປະເທດ. ເພີ່ມທະວີການເຝິກອົບ ຮົມ ແລະ ແລກປ່ຽນດ້ານການສຶກສາໃຫ້ຜູ້ບໍລິຫານ ແລະ ນັກຮຽນ ຊັ້ນປະຖົມ, ມັດທະຍົມ ແລະ ມະຫາວິທະຍາໄລ. ສະໜັບສະໜູນໃຫ້ນັກຮຽນຂອງຕົນຮຽນພາສາຂອງອີກຝ່າຍໜຶ່ງ, ໂດຍແມ່ນ ພາກສ່ວນກ່ຽວຂ້ອງຂອງສອງ ຝ່າຍອຳນວຍຄວາມສະດວກ.

ພະແນກສຶກສາແຂວງຢຸນນານຮັບປາກວ່າ ນັບແຕ່ປີ 2013 ຈະເພີ່ມທຶນການສຶກສາໃຫ້ແກ່ ສປປ ລາວ ຕື່ມອີກ ປີລະ 10 ທຶນ. ອຳນາດການປົກຄອງນະຄອນພູເອີ້ ວາງແຜນເລີ່ມແຕ່ປີ 2013 ຈະ ອອກທຶນ 10 ລ້ານ ຢວນ, ເພື່ອຈັດຝຶກອົບຮົມ 5 ຊຸດ ໃຫ້ແກ່ນັກສຶກສາ ຈາກ 4 ແຂວງພາກເໜືອ ລາວໂດຍສະເພາະແມ່ນ ແຂວງ ຜົ້ງສາລີ.

3.6.2. ສອງຝ່າຍສືບຈັດຕັ້ງປະຕິບັດໃຫ້ເກີດຜົນເປັນຈິງ ສັນຍາຮ່ວມມືດ້ານວິທະຍາສາດ ແລະ ເຕັກໂນໂລຊີ ລະຫວ່າງ ກົມແຜນການ ແລະ ການຮ່ວມມື, ກະຊວງວິທະຍາສາດ ແລະ ເຕັກໂນໂລຊີ ສປປ ລາວ ແລະ ພະແນກວິທະຍາສາດ ເຕັກໂນໂລຊີແຂວງຢູນນານ ເພື່ອເພີ່ມທະວີການຮ່ວມມືດ້ານວິທະຍາສາດ-ເຕັກນິກ. ສືບຕໍ່ການຮ່ວມມືເຕັກນິກ-ວິທະຍາສາດ ເປັນຕົ້ນ ແມ່ນດ້ານກະສິກຳ ແລະ ພະລັງງານທົດແທນ.

3.6.3. ສອງຝ່າຍຊຸກຍູ້ການຈັດຕັ້ງປະຕິບັດ ສັນຍາວ່າດ້ວຍການຮ່ວມມືສ້າງ ແລະ ຈັດຕັ້ງປະຕິບັດໂຄງການ ຄົ້ນຄວ້າ, ພັດທະນາ ແລະ ນຳໃຊ້ຊັບພະຍາກອນພັນທຸກຳ ຂອງຊະນິດພັນໄມ້ພື້ນເມືອງລາວ ລະຫວ່າງ ສະຖາບັນນິເວດວິທະຍາ ແລະ ເຕັກໂນໂລຊີຊີວະພາບ, ກະຊວງວິທະຍາສາດ ແລະ ເຕັກໂນໂລຊີ ຂອງ ສປປ ລາວ ແລະ ມະຫາວິທະຍາໄລກະເສດສາດຢູນນານ ຂອງ ສປ ຈີນ.

3.6.4. ສອງຝ່າຍສືບຕໍ່ປັບປຸງໃຫ້ສົມບູນ ກົນໄກການຮ່ວມກັນປ້ອງກັນ ແລະ ຄວບຄຸມພະຍາດລະບາດຕາມເຂດຊາຍແດນ, ເພື່ອປ້ອງກັນການລະບາດ ແລະ ຕິດຕໍ່ ພະຍາດເອດ, ພະຍາດໄຂ້ມະເລເລຍ, ໄຂ້ເລືອດອອກ ແລະ ພະຍາດອື່ນໆ ໃຫ້ມີປະສິດທິຜົນ.

3.6.5. ສອງຝ່າຍຮ່ວມກັນຂະຫຍາຍການຮ່ວມມືແລກປ່ຽນ ຂົງເຂດການປິ່ນປົວ ສາທາລະນະສຸກ, ຊ່ວຍເຫຼືອ ໃນການຍົກລະດັບການບໍລິການ ດ້ານການປິ່ນປົວ ຂອງແພດໝໍ ທີ່ຢູ່ໂຮງໝໍ ແຂວງພາກເໜືອລາວ. ເພີ່ມທະວີການຮ່ວມມືດ້ານເຕັກນິກການຜະລິດຢາພື້ນເມືອງຂອງປະຊາຊົນ, ລິເລີ່ມການຮ່ວມມືດ້ານ ການຄຸ້ມຄອງກວດກາ ຄວາມປອດໄພ ອາຫານ ແລະ ຢາ ຂອງສອງປະເທດ.

## 3.7 ກຸ່ມຮ່ວມມືດ້ານວຽກງານຊາຍແດນ, ດ່ານເຂົ້າ-ອອກເມືອງ, ແຮງງານ ແລະ ປ້ອງກັນຄວາມສະຫງົບ.

3.7.1. ສອງຝ່າຍຈະຮ່ວມກັນປະຕິບັດສັນຍາວ່າດ້ວຍລະບຽບການຄຸ້ມຄອງຊາຍແດນ ແລະ ສັນຍາວ່າດ້ວຍດ່ານຊາຍແດນ ແລະ ລະບຽບຄຸ້ມຄອງດ່ານຊາຍແດນ ລະຫວ່າງ ລັດຖະບານ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ແລະ ລັດຖະບານ ແຫ່ງ ສາທາລະນະລັດ ປະຊາຊົນຈີນ ສະບັບທີ່ໄດ້ລົງນາມຮ່ວມກັນ ໃນເດືອນ ສິງຫາ ປີ 2011. ພ້ອມທັງຈະຊຸກຍູ້ພາກສ່ວນກ່ຽວຂ້ອງຂອງຕົນເອົາໃຈໃສ່ເຜີຍແຜ່ ແລະ ຈັດຕັ້ງປະຕິບັດ ສັນຍາວ່າດ້ວຍ ລະບຽບການຄຸ້ມຄອງຊາຍແດນ ແລະ ສັນຍາວ່າດ້ວຍດ່ານຊາຍແດນ ແລະ ລະບຽບ ການຄຸ້ມຄອງດ່ານຊາຍແດນໃຫ້ພະນັກງານ ແລະ ປະຊາຊົນ ໄດ້ເຂົ້າໃຈ ແລະ ໃຫ້ການເຄົາລົບ ປະຕິບັດຢ່າງທົ່ວເຖິງ.

3.7.2. ສອງຝ່າຍສືບຕໍ່ເພີ່ມທະວີກໍ່ສ້າງພື້ນຖານໂຄງລ່າງຂອງດ່ານຊາຍແດນບໍ່ເຕັນ-ບໍ່ຫານ, ເມືອງຄຳ-ລານຕຸ້ຍ, ປັບປຸງໂຄງລ່າງດ່ານກວດກາໃຫ້ສົມບູນ, ເຮັດໃຫ້ການຄຸ້ມຄອງດ່ານມີຄວາມເປັນລະບຽບ, ເພື່ອສ້າງສະພາບແວດລ້ອມຂອງການແຈ້ງດ່ານເຂົ້າ-ອອກເມືອງໃຫ້ໄດ້ດີ, ຍົກລະດັບຄຸນນະພາບໃນການແຈ້ງດ່ານເຂົ້າ-ອອກໃຫ້ສະດວກຂຶ້ນ, ຍົກສູງລະດັບການແຈ້ງດ່ານໃຫ້ມີຄວາມສະດວກ, ຮັບປະກັນປະສິດທິພາບໃນການຄຸ້ມຄອງດ່ານ ໃຫ້ໄດ້ຮັບຜົນສູງ ແລະ ຝຶກອົບຮົມ ພະນັກງານ ເພື່ອເປັນເງື່ອນໄຂສະດວກໃຫ້ແກ່ການຮ່ວມມືໃຫ້ດີຍິ່ງຂຶ້ນ.

3.7.3. ເພີ່ມທະວີການຮ່ວມມືດ້ານວຽກງານປ້ອງກັນຄວາມສະຫງົບ, ພ້ອມກັນປ້ອງກັນເຂດຊາຍແດນໃຫ້ມີຄວາມສະຫງົບ ແລະ ມີສັນຕິພາບ, ພ້ອມກັນສະກັດກັ້ນ ແລະ ຕ້ານການລັກລອບເຂົ້າເມືອງ, ອາດຊະຍາກຳຂ້າມຊາດ. ເພີ່ມທະວີຄວາມຮັດກຸມບັນຫາຢາເສບຕິດຢູ່ຊາຍແດນ, ເກືອດຫ້າມການປູກພືດເສບຕິດ ແລະ ຕ້ານການຫຼິ້ນການພະນັນທຸກຊະນິດ. ນຳໃຊ້ມາດຕະການທີ່ຖືກຕ້ອງເພື່ອປ້ອງກັນສິດຜົນປະໂຫຍດຂອງປະຊາຊົນໃນປະເທດອີກຝ່າຍໜຶ່ງຕາມກົດໝາຍຝ່າຍໜຶ່ງ. ເພີ່ມລະດັບການຮ່ວມມື ເພື່ອຕໍ່ຕ້ານພວກກໍ່ການຮ້າຍ, ເພື່ອເປັນການຮັກສາສະຖຽນລະພາບຄວາມປອດໄພທັງສອງ

ຝ່າຍ. ຮ່ວມມືໃນການປະຕິບັດກົດໝາຍຕາມລຳແມ່ນ້ຳຂອງໃຫ້ມີຄວາມຮັດກຸມ ແລະ ເລິກເຊິ່ງ, ເອົາໃຈໃສ່ວຽກງານປ້ອງກັນຄວາມສະຫງົບຕາມລຳແມ່ນ້ຳຂອງ.

3.7.4. ພາກສ່ວນກ່ຽວຂ້ອງແຂວງຢູນນານຊຸກຍູ້ພາກສ່ວນກ່ຽວຂ້ອງຂອງຕົນເອົາໃຈໃສ່ເຜີຍແຜ່ ແລະແນະນຳໃຫ້ຜູ້ປະກອບການ ແລະ ພາກສ່ວນທີ່ສົ່ງແຮງງານເຂົ້າມາ ສປປ ລາວ ລວມທັງຜູ້ທີ່ເປັນແຮງງານເອງ ໃຫ້ປະຕິບັດລະບຽບກົດໝາຍທີ່ກ່ຽວຂ້ອງຂອງ ສປປ ລາວ ຢ່າງເຄັ່ງຄັດ ລວມທັງບັນຫາທີ່ກ່ຽວຂ້ອງກັບເລື່ອງໂກຕາແຮງງານ, ການຂໍວີຊາ, ການກຳນົດເວລາອະນຸຍາດເຮັດວຽກ ແລະ ການເຮັດບັດອະນຸຍາດເຮັດວຽກຂອງແຮງງານຈີນ.

3.8 ຊຸກຍູ້ການກໍ່ສ້າງເຂດຮ່ວມມືເສດຖະກິດ ລາວ-ຈີນ ບໍ່ເຕັນ-ບໍ່ຫານ: ໜຶ່ງ, ຄະນະກຳມະການຄຸ້ມຄອງເຂດເສດຖະກິດພິເສດ ສປປ ລາວ ແລະ ອຳນາດການປົກຄອງ ແຂວງຢູນນານ ສ້າງຕັ້ງ ຄະນະເຮັດວຽກຮ່ວມ ກໍ່ສ້າງເຂດຮ່ວມມືເສດຖະກິດ ລາວ-ຈີນ ບໍ່ເຕັນ-ບໍ່ຫານ, ເພື່ອດຳເນີນການປຶກສາຫາລືແລກປ່ຽນກ່ຽວກັບທິດທາງການກໍ່ສ້າງເຂດຮ່ວມມື, ນະໂຍບາຍທີ່ກ່ຽວຂ້ອງ ແລະ ມາດຕະການຊຸກຍູ້; ສອງ, ຄະນະກຳມະການຄຸ້ມຄອງເຂດເສດຖະກິດພິເສດ ສປປ ລາວ ແລະ ອຳນາດການປົກຄອງແຂວງຢູນນານ ຮ່ວມເຊັນ "ບົດບັນທຶກຄວາມເຂົ້າໃຈ ວ່າດ້ວຍ ການຮ່ວມມືໃນເຂດຮ່ວມມືເສດຖະກິດລາວ-ຈີນ ບໍ່ເຕນ-ບໍ່ຫານ" ; ສາມ, ປັບປຸງຄະນະເຮັດວຽກຮ່ວມເຂດຮ່ວມມືເສດຖະກິດລາວ-ຈີນ ໃຫ້ມີຄວາມພ້ອມຂຶ້ນ.

## IV. ການດຳເນີນກົນໄກປະສານງານຮ່ວມມືພາກເໜືອລາວ ກັບ ແຂວງຢູນນານ.

4.1. ກອງປະຊຸມເຫັນວ່າ: ໃນໄລຍະ 9 ປີ ຜ່ານມາ ຄະນະປະສານງານຮ່ວມມືພາກເໜືອລາວ ກັບແຂວງຢູນນານ ໄດ້ມີການປະກອບສ່ວນອັນສຳຄັນໃນເພີ່ມທະວີການຮ່ວມມື ແລະ ການແລກປ່ຽນດ້ານເສດຖະກິດການຄ້າເຕັກນິກ ລະຫວ່າງ ແຂວງຢູນນານ ກັບ ລາວ ໂດຍສະເພາະ 9 ແຂວງພາກເໜືອລາວ, ເພື່ອເປັນການສົ່ງເສີມການຮ່ວມມືສອງຝ່າຍໃຫ້ເພີ່ມຂຶ້ນອີກກ້າວໜຶ່ງ, ຕ້ອງເພີ່ມທະວີວຽກງານຂອງໜ່ວຍງານປະສານງານເທື່ອລະກ້າວ, ເສີມຂະຫຍາຍບົດບາດຂອງກົນໄກປະສານງານຂອງກົນໄກປະສານງານສອງຝ່າຍ, ຂຸດຄົ້ນທຸກກຳລັງບົ່ມຊ້ອນ, ຂະຫຍາຍຂອບເຂດການຮ່ວມມືໃຫ້ກວ້າງຂຶ້ນ, ຂະຫຍາຍຜົນສຳເລັດໃນການຮ່ວມມື.

4.2. ສອງຝ່າຍເຫັນດີເປັນເອກະພາບກັນວ່າ: ໃນລະຫວ່າງສອງກອງປະຊຸມ, ຫ້ອງການຄະນະກຳມາທິການຮ່ວມມື ລາວ-ຈີນ ກັບ ຄະນະປະຕິຮູບ ແລະ ພັດທະນາແຂວງຢູນນານ ໃນນາມເປັນອົງກອນຮັບຜິດຊອບວຽກງານປະຈຳຂອງທັງສອງຝ່າຍ ມີໜ້າທີ່ຮັບຜິດຊອບຕົ້ນຕໍໃນການຕິດຕໍ່ພົວພັນປະສານກັນເປັນປະຈຳ, ກວດກາ ແລະ ຊຸກຍູ້ການຈັດຕັ້ງຜັນຂະຫຍາຍບົດບັນທຶກໃຫ້ໄດ້ຮັບຜົນເປັນຈິງ, ປະສານສົມທົບແກ້ໄຂບັນຫາທີ່ຄ້າງຄາໃນການຮ່ວມມືຂອງສອງຝ່າຍ; ເກັບກຳໂຄງການການຮ່ວມມື ໃໝ່ ແລະ ຫົວຂໍ້ສົນໃຈໃໝ່ໆ.

4.3. ສອງຝ່າຍເຫັນດີຮ່ວມກັນໃນ ລະຫວ່າງ ສອງກອງປະຊຸມ, ຖ້າມີວຽກງານລະອຽດທີ່ຕ້ອງການ, ຜ່ານການຕົກລົງຂອງສອງຝ່າຍແລ້ວ ສາມາດເປີດກອງປະຊຸມວິສາມັນ; ແຕ່ລະກຸ່ມກໍ່ເຊັ່ນດຽວກັນສາມາດອີງຕາມ ຄວາມຕ້ອງການສະເພາະກຸ່ມຕົນເອງ, ຈັດກອງປະຊຸມສາມັນ ແລະ ວິສາມັນຂຶ້ນເພື່ອ ແລກປ່ຽນຄຳເຫັນຕໍ່ກັບ ວຽກງານການຮ່ວມມືຂອງແຕ່ລະຂະແໜງການຂອງຕົນ.

4.4. ສອງຝ່າຍເຫັນດີວ່າ: ໃນໂອກາດຄົບຮອບ 10 ປີ ຂອງການສ້າງຕັ້ງ ຄະນະປະສານງານພາກເໜືອລາວກັບແຂວງຢູນນານຄົບຮອບ 10 ປີ, ແຕ່ລະຝ່າຍຈັດກິດຈະກຳສະເຫຼີມສະຫຼອງໃນເດືອນຕຸລາ 2014.

## V. ວຽກງານອື່ນໆ.

5.1. ສອງຝ່າຍເຫັນດີເປັນເອກະພາບກັນວ່າ ກອງປະຊຸມຄັ້ງທີ VII ຂອງຄະນະປະສານງານພາກເໜືອລາວ ກັບແຂວງຢຸນນານຈະຈັດຂຶ້ນຢູ່ທີ່ ສປປ ລາວ ໃນ ໄຕມາດທີ 4 ຂອງ ປີ 2015, ກ່ຽວກັບສະຖານທີ່ ແມ່ນ ໃຫ້ຝ່າຍລາວເປັນຜູ້ກໍານົດ, ສ່ວນວັນເວລາລະອຽດແມ່ນສອງຝ່າຍ ຮ່ວມກັນປຶກສາຫາລືແລ້ວ ກໍານົດ.

5.2. ບົດບັນທຶກກອງປະຊຸມສະບັບນີ້ ເຊັນກັນໃນວັນທີ 17 ຕຸລາ 2013 ທີ່ນະຄອນພູເອີ ແຂວງຢຸນນານ, ຂຽນເປັນ 2 ສະບັບຕົ້ນ, ແຕ່ລະຝ່າຍຮັກສາໄວ້ 1 ສະບັບ, ແຕ່ລະສະບັບຂຽນເປັນພາສາລາວ ແລະ ພາສາຈີນ, ສອງພາສາລ້ວນແຕ່ມີຄຸນຄ່າເທົ່າທຽມກັນ.

| ຕາງໜ້າຝ່າຍລາວ | ຕາງໜ້າຝ່າຍຈີນ |
|---|---|
| ຜູ້ຊ່ວຍລັດຖະມົນຕີວ່າການກະຊວງແຜນການ ແລະ ການລົງທຶນ, ຮອງປະທານຄະນະກໍາມາທິການຮ່ວມມື ລາວ-ຈີນ | ຮອງເຈົ້າແຂວງຢຸນນານ ຫົວໜ້າຄະນະປະສານງານແຂວງຢຸນນານ ກັບ ພາກເໜືອລາວ |